ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ

# ແຜນຍຸດທະສາດ ການພັດທະນາ ອາຊີວະສຶກສາ
# ແລະ ອົບຮົມວິຊາຊີບ 2006 – 2020

ວຽງຈັນ, ເມສາ 2007

# ສາລະບານ

ເນື້ອໃນ ໜ້າ

ຄຳນຳ ........ 1
ພາກທີI ສະພາບການຈັດຕັ້ງປະຕິບັດວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບໃນໄລຍະຜ່ານມາ. 2
1. ສະພາບການຈັດຕັ້ງປະຕິບັດວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ເຖິງປະຈຸບັນ ........ 2
2. ສັງເກດຕີລາຄາລວມ ........ 2
2.1 ບັນດາຜົນສຳເລັດຂອງການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຜ່ານມາ ........ 3
2.2 ສະພາບບັນຫາ ........ 4
2.3 ຈຸດດີ, ຈຸດອ່ອນ ແລະ ສາເຫດ ........ 5
2.3.1 ຈຸດດີ ແລະ ສາເຫດ ........ 5
2.3.2 ຈຸດອ່ອນ ແລະ ສາເຫດ ........ 6
2.4 ຖອດຖອນບົດຮຽນ ........ 7
2.4 ຖອດຖອນບົດຮຽນ ........ 7
ພາກທີ II ແຜນຍຸດທະສາດການພັດທະນາອາຊີວະສຶກສາແລະອົບຮົມວິຊາຊີບ ແຕ່ນີ້ຮອດປີ 2020 **..... 9**
1 ສະພາບລວມ ........ 9
2. ວິໃສທັດ ແລະ ຄາດໝາຍລວມ ........ 10
2.1 ວິໃສທັດ ........ 10
2.2 ຄາດໜມາຍລວມ ........ 10
3. ຍຸດທະສາດການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ........ 11
3.1 ຍຸດທະສາດການກໍ່ສ້າງ, ປັບປຸງ ແລະ ຂະຫຍາຍສະຖານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ........ 11
3.2 ຍຸດທະສາດ ການປະຕິຮູບ ລະບົບອາຊີວະສຶກສາ ແລະ ອົບຮົມວິຊາຊີບ ........ 12
3.3. ຍຸດທະສາດການກໍ່ສ້າງ, ບຳລຸງ ແລະ ພັດທະນາຄູ ແລະ ບຸກຄະລາກອນ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ........ 12
3.4 ຍຸດທະສາດການປະກັນຄຸນນະພາບວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ........ 12
3.5. ຍຸດທະສາດການພັດທະນາຂໍ້ມູນ-ຂ່າວສານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ........ 12
3.6. ຍຸດທະສາດການປັບປຸງກົງຈັກການຄຸ້ມຄອງສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ........ 13
3.7 ຍຸດທະສາດການສ້າງນະໂຍບາຍ ແລະ ເຄື່ອງມືຄຸ້ມຄອງມະຫາພາກ ໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ........ 13
ພາກທີ III ແຜນດຳເນີນງານ ການພັດທະນາວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບແຕ່ນີ້ຮອດປີ 2010 ........ 14
ຄາດໜມາຍ: ........ 14
1. ແຜນງານຂະຫຍາຍໂອກາດເຂົ້າຮຽນ ........ 15
2. ແຜນງານປັບປຸງຄຸນະພາບ ແລະ ຄວາມສອດຄ່ອງ ........ 16

3. ແຜນງານປັບປຸງບໍລິຫານ - ການຄຸ້ມຄອງ ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ........ 17
ພາກທີ IV ແຜນດໍາເນີນງານການພັດທະນາວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບແຕ່ ປີ 2010 - 2020 ........ 19
ຄາດໝາຍ: ........ 19
1. ແຜນງານຂະຫຍາຍໂອກາດເຂົ້າຮຽນ ........ 20
2. ແຜນງານປັບປຸງຄຸນະພາບ ແລະ ຄວາມສອດຄ່ອງ ........ 20
3. ແຜນງານບໍລິຫານ ແລະ ການຄຸ້ມຄອງ ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ........ 22
ພາກທີ V ວິທີການຈັດຕັ້ງປະຕິບັດ ........ 23
ເອກະສານຄັດຕິດ ........ 24

**ຄຳນຳ**

ເພື່ອເຮັດໃຫ້ມີການປະສານງານຢ່າງກົມກຽວກັນທາງດ້ານນະໂຍບາຍ, ມາດຕະການ ແລະ ບັນດາກິດຈະການໃນວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ, ສ້າງຄວາມກົມກຽວແນໃສ່ປະກອບສ່ວນພັດທະນາ ເສດຖະກິດ-ສັງຄົມ, ກະຊວງສຶກສາທິການໄດ້ພັດທະນາ ແລະ ຮັບຮອງ "ເອກະສານຍຸດທະສາດ ວ່າດ້ວຍການ ພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ" ໃນເດືອນ 04 ປີ 1997 ຊຶ່ງເປັນຊ່ວງທີ່ລັດຖະບານແຫ່ງ ສປປ ລາວ ໄດ້ມີ ການປັບປຸງນະໂຍບາຍ ແລະ ແຜນການພັດທະນາເສດຖະກິດ-ສັງຄົມຂອງປະເທດ.

ມາເຖິງປະຈຸບັນໄດ້ເຫັນວ່າເອກະສານຍຸດທະສາດດັ່ງກ່າວ ບໍ່ສອດຄ່ອງກັບສະພາບການຕົວຈິງ ເພື່ອພັດທະນາຊັບພະຍາກອນມະນຸດ ແລະ ປະກອບສ່ວນໃນການພັດທະນາ ເສດຖະກິດ-ສັງຄົມ ຂອງປະເທດລາວໃນປະຈຸບັນ.

ແຜນຍຸດທະສາດອາຊີວະສຶກສາ ແລະ ອົບຮົມວິຊາຊີບ ສະບັບປັບປຸງໃໝ່ນີ້ໄດ້ຕິດພັນກັບແຜນການປະຕິຮູບການສຶກສາ ແລະ ສອດຄ່ອງກັບແຜນພັດທະນາການສຶກສາ ແຕ່ນີ້ ເຖິງປີ 2020 ຂອງກະຊວງສຶກສາທິການ ແລະ ແທດເໝາະກັບການຂະຫຍາຍ ແລະ ພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ດັ່ງທີ່ມີຢູ່ໃນປະຈຸບັນໃຫ້ມີການພັດທະນາຢ່າງຕໍ່ເນື່ອງ ແລະ ເປັນລະບົບ ເຮັດໃຫ້ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ມີຄວາມຍືນຍົງ, ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ພ້ອມດຽວກັນນັ້ນກໍ່ຈະເປັນການປະກອບສ່ວນ ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມຂອງປະເທດ ບັນລຸຜົນຕາມຄາດໝາຍເປັນຕົ້ນ ປະຕິບັດແຜນຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ແນໃສ່ຫັນປະເທດໃຫ້ເປັນປະເທດອຸດສະຫະກຳ ແລະ ທັນສະໃໝ.

ແຜນຍຸດທະສາດສະບັບປັບປຸງໃໝ່ນີ້ ໄດ້ຍຶດຖືຫລັກການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ເປັນການສຶກສາຕະຫຼອດຊີວິດ, ໃຫ້ສັງຄົມມີສ່ວນຮ່ວມ ແລະ ພັດທະນາສາລະ ແລະ ຂະບວນການຮຽນໃຫ້ຕໍ່ເນື່ອງ ໂດຍນຳໃຊ້ສາມຮູບແບບຄື ຮູບແບບການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ການຮຽນຕາມອັດຕະຍາໄສ. ໃນການສະໜອງອາຊີວະສຶກສາ ແລະ ອົບຮົມວິຊາຊີບ ກໍ່ຈະນຳໃຊ້ ວິທີການຕ່າງໆຄື ຈັດຕັ້ງການຝຶກອົບຮົມວິຊາຊີບແບບປະສົມ, ການຝຶກອົບຮົມວິຊາຊີບແບບມີສ່ວນຮ່ວມ, ການຈັດຕັ້ງການສິດສອນສາຍພິເສດ, ການຈັດຕັ້ງການສິດສອນໄລຍະສັ້ນ, ການຮຽນທາງຈົດໝາຍ, ການຮຽນແບບເປີດ, ການຮຽນທາງໄກ ແລະ ອື່ນໆໂດຍໃຫ້ອີງໃສ່ສະພາບແວດລ້ອມ, ເງື່ອນໄຂ ແລະ ຈຸດພິເສດຂອງຜູ້ສະໜອງອາຊີວະສຶກສາ ແລະ ອົບຮົມວິຊາຊີບ ແລະ ທີ່ຕັ້ງສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ. ແຕ່ລະຮູບແບບ ແລະ ວິທີການພັດທະນາ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ກະຊວງສຶກສາທິການສົມທົບກັບພາກສ່ວນກ່ຽວຂ້ອງກັບວຽກງານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຈະເປັນຜູ້ອອກຂໍ້ກຳນົດກົດລະບຽບ ແລະ ແຜນພັດທະນາ ອາຊີວະສຶກສາ ແລະ ອົບຮົມວິຊາຊີບຄົບຊຸດ ໂດຍປະຕິບັດຕາມສາມແຜນງານຄື: ການຂະຫຍາຍໂອກາດເຂົ້າຮຽນ, ຄຸນນະພາບ ແລະ ຄວາມສອດຄ່ອງ ແລະ ການບໍລິຫານ ແລະ ຄຸ້ມຄອງແນໃສ່ປະກອບສ່ວນພັດທະນາລະບົບ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ຄົບຊຸດ ແລະ ມີຄຸນນະພາບ.

# ພາກທີ I
# ສະພາບການຈັດຕັ້ງປະຕິບັດວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນໄລຍະ ຜ່ານມາ

## 1. ສະພາບການຈັດຕັ້ງປະຕິບັດວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ເຖິງປະຈຸບັນ

ໃນໄລຍະແຕ່ປີ1996-2000 ຂະແໜງການສຶກສາໄດ້ສືບຕໍ່ພັດທະນາການສຶກສາດ້ວຍ 5 ແຜນງານໃຫຍ່ ຄື: ແຜນງານສາມັນສຶກສາ ແລະອະນຸບານສຶກສາ, ແຜນງານການສຶກສານອກລະບົບໂຮງຮຽນ, ແຜນງານການກໍ່ສ້າງ ແລະບຳລຸງຄູ, ແຜນງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ແລະ ແຜນງານການບໍລິຫານ ແລະ ການຄຸ້ມຄອງ. ໂດຍສະເພາະວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໄດ້ສືບຕໍ່ມີການປະຕິຮູບ ນັບແຕ່ປີ 1997 ເປັນຕົ້ນມາ ໂດຍອີງໃສ່ເອກະສານຍຸດທະສາດອາຊີວະສຶກສາ ແລະ ອົບຮົມວິຊາຊີບ ແລະ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບສະບັບເລກທີ 209.ນຍ ລົງວັນທີ 19/10/1998.

ເອກະສານຍຸດທະສາດອາຊີວະສຶກສາແລະອົບຮົມວິຊາຊີບທີ່ສ້າງຂຶ້ນໃນປີ 1997 ໄດ້ເປັນບ່ອນອີງທີ່ສຳຄັນໃນການສ້າງບັນດາເອກະສານນິຕິກຳ ແລະ ລະບຽບຫລັກການຕ່າງໆຫລາຍສະບັບທີ່ເປັນເຄື່ອງມືສຳຄັນໃນການບໍລິຫານ-ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານອາຊີວະສຶກສາແລະອົບຮົມວິຊາຊີບ.

ໃນປີ 2000 ຂະແໜງການສຶກສາ ໄດ້ພັດທະນາ ແລະ ປັບປຸງແຜນຍຸດທະສາດການສຶກສາຄືນໃໝ່ ໂດຍໄດ້ຈັດເປັນ 3 ແຜນງານໃຫຍ່ຄື: (1) ແຜນງານການຂະຫຍາຍໂອກາດເຂົ້າຮຽນ, (2) ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ ແລະ (3) ແຜນງານບໍລິຫານ-ຄຸ້ມຄອງການສຶກສາ. ຜ່ານການຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກ່າວ ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ພວກເຮົາໄດ້ຮັບຜົນສຳເລັດໃນຫຼາຍດ້ານ. ລັດຖະບານໄດ້ເໜັ້ນໜັກບົດບາດ ແລະ ຄວາມສຳຄັນຂອງວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນການກໍ່ສ້າງ ແລະ ຍົກລະດັບກຳລັງແຮງງານແນໃສ່ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດເວົ້າລວມ ແລະ ເວົ້າສະເພາະ ແມ່ນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ນັບມື້ ນັບດີ ຂຶ້ນ .

## 2. ສັງເກດຕີລາຄາລວມ

ຜ່ານການຈັດຕັ້ງປະຕິບັດຍຸດທະສາດການສຶກສາ 2001-2020 ແລະ ແຜນພັດທະນາການສຶກສາ 2001-2005 ໃນໄລຍະຜ່ານມາເວົ້າລວມ, ເວົ້າສະເພາະການຈັດຕັ້ງປະຕິບັດຍຸດທະສາດອາຊີວະສຶກສາ ແລະອົບຮົມວິຊາຊີບ (1997), ກໍຄືການຜັນຂະຫຍາຍບັນດາດຳລັດ, ຂໍ້ຕົກລົງ, ຂໍ້ກຳນົດ ແລະ ລະບຽບຫລັກການສາມາດບັນລຸໄດ້ຜົນສຳເລັດຕ່າງໆ ລວມທັງບັນດາຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ສາເຫດທີ່ກ່ຽວຂ້ອງ ຊຶ່ງສາມາດສັງລວມໄດ້ລຸ່ມນີ້:

## 2.1 ບັນດາຜົນສຳເລັດຂອງການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຜ່ານມາ

1) ສຳເລັດການສ້າງຕັ້ງ ສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ ພ້ອມດ້ວຍໜ່ວຍງານສະໜັບສະໜູນ (ຫ້ອງການປະຈຳ ແລະ ບັນດາໜ່ວຍງານກຸ່ມອາຊີບ),

2) ໄດ້ສ້າງບັນດາເອກະສານທາງດ້ານນິຕິກຳ ທີ່ເປັນເຄື່ອງມືໃນການບໍລິຫານ-ຄຸ້ມຄອງ ໃນລະດັບຕ່າງໆ ຫລາຍສະບັບ ເຊັ່ນ:
   - ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 209/ສນຍ, ລົງວັນທີ 19 ຕຸລາ 1998 ວ່າດ້ວຍການພັດທະນາວຽກງານອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ ຢູ່ ສປປ ລາວ,
   - ດຳລັດນາຍົກລັດຖະມົນຕີສະບັບເລກທີ 35/ນຍ, ລົງວັນທີ 04/04/2002 ວ່າດ້ວຍການແຕ່ງຕັ້ງສະມາຊິກສະພາທີ່ປຶກສາອາຊີວະສຶກສາ ແຫ່ງຊາດ,
   - ຂໍ້ຕົກລົງຂອງປະທານສະພາທີ່ປຶກສາອາຊີວະສຶກສາ ແຫ່ງຊາດ ສະບັບເລກທີ 1327/ ສອຊ/ 02 ວ່າດ້ວຍການຈັດຕັ້ງ ແລະລະບຽບການເຄື່ອນໄຫວ ຂອງສະພາທີ່ປຶກສາອາຊີວະສຶກສາ ແຫ່ງ ຊາດ,
   - ຂໍ້ຕົກລົງຂອງປະທານສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ ສະບັບເລກທີ 425/ ສພຊ/ 03 ລົງວັນທີ 20/03/2003 ວ່າດ້ວຍການຈັດຕັ້ງ ແລະ ລະບຽບການເຄື່ອນໄຫວ ຂອງໜ່ວຍງານກຸ່ມອາຊີບ,
   - ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການສະບັບເລກທີ່ 1663/ສສ/ອສ, ລົງວັນທີ 10 ຕຸລາ 1998 ວ່າດ້ວຍການສ້າງຕັ້ງສູນພັດທະນາອາຊີວະສຶກສາ,
   - ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການສະບັບເລກທີ່ 481/ສສ/ອສ ລົງວັນທີ 24/03/2004 ວ່າດ້ວຍການປັບປຸງພາລະບົດບາດຂອງສູນພັດທະນາອາຊີວະສຶກສາ,
   - ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການສະບັບເລກທີ່ 1503/ສສ/ ອສ. 03, ລົງວັນ ທີ 10 ກັນຍາ 2003 ວ່າດ້ວຍການຄຸ້ມຄອງໂຮງຮຽນວິຊາຊີບແບບປະສົມ.
   - ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການສະບັບເລກທີ່ 193/ສສ/ ອສ.2001, ລົງວັນ ທີ 11/12/ 2001 ວ່າດ້ວຍການຄຸ້ມຄອງລາຍຮັບວິຊາການ.
   - ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການສະບັບເລກທີ່ 481/ສສ/ ອສ. 04, ລົງວັນ ທີ 24/3/ 2004 ວ່າດ້ວຍການປັບປຸງພາລະບົດບາດຂອງສູນພັດທະນາອາຊີວະສຶກສາ
   - ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການສະບັບເລກທີ່ 1464/ສສ/ ອສ. 06, ລົງວັນ ທີ 1/8/ 2006 ວ່າດ້ວຍການຍົກລະດັບໂຮງຮຽນເຕັກນິກສັບພະວິຊາ ເປັນວິທະຍາໄລເຕັກນິກສັບພະວິຊາ.

3) ສຳເລັດການສ້າງຕັ້ງສູນພັດທະນາອາຊີວະສຶກສາ, ໂຮງຮຽນອາຊີວະສຶກສາ ແລະ ໂຮງຮຽນວິຊາຊີບແບບປະສົມ ໃນບັນດາແຂວງຈຳນວນໜຶ່ງ ພ້ອມທັງປະກອບວັດຖຸອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ. ມາຮອດປະຈຸບັນຍັງມີພຽງແຕ່ 2 ແຂວງເທົ່ານັ້ນ ( ສາລະວັນ ແລະ ເຊກອງ) ທີ່ຍັງບໍ່ທັນມີ ໂຮງຮຽນອາຊີວະສຶກສາ. ຈຳນວນນັກຮຽນອາຊີວະສຶກສາ ແລະ ການສຶກສາຊັ້ນສູງເພີ່ມຂຶ້ນຈາກ 9587 ຄົນ ໃນປີ 2000 ມາເປັນ 24.847 ຄົນ ໃນປີ 2005,

ຈຳນວນພະນັກງານ, ຄູ-ອາຈານເພີ່ມຂຶ້ນຈາກ 1586 ຄົນ ໃນປີ 2000 ເປັນ 2363 ຄົນ ໃນປີ 2005.

4) ໄດ້ພັດທະນາລະບົບການກໍ່ສ້າງ ແລະ ບຳລຸງຄູອາຊີວະສຶກສາ ພ້ອມທັງດຳເນີນການກໍ່ສ້າງ ແລະ ບຳລຸງຍົກລະດັບຄູອາຊີວະສຶກສາ ແລະ ບຸກຄະລາກອນອາຊີວະສຶກສາ ຈຳນວນຫລວງຫລາຍ ເພື່ອໃຫ້ສອດຄ່ອງແລະຕອບສະໜອງຄວາມຕ້ອງການຂອງ ການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ທັງໃນ ແລະ ນອກລະບົບໂຮງຮຽນ.
5) ໄດ້ພັດທະນາ ແລະ ປັບປຸງຫລັກສູດ ແລະ ສື່ການຮຽນ-ການສອນໃນຫລາຍສາຂາວິຊາວິຊາຮຽນ ໂດຍການປະກອບສ່ວນຂອງຜູ້ສະໜອງການຝຶກອົບຮົມທັງພາກລັດ ແລະ ພາກເອກະຊົນ,
6) ສຳເລັດການຈັດຕັ້ງປະຕິບັດຫລາຍໂຄງການພາຍໃນ, ໂຄງການຮ່ວມມືກັບອົງການຈັດຕັ້ງສາກົນ ແລະໂຄງການຮ່ວມມືກັບຕ່າງປະເທດ ໃນການກໍ່ສ້າງ, ຂະຫຍາຍ ແລະ ປັບປຸງໂຮງຮຽນອາຊີວະສຶກສາ/ ສູນຝຶກອົບຮົມວິຊາຊີບ ທັງພາກລັດ ແລະ ພາກເອກະຊົນ.

## 2.2 ສະພາບບັນຫາ

ຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ ຍັງສັງລວມໄດ້ ບາງບັນຫາ ທີ່ຈະຕ້ອງໄດ້ເອົາໃຈໃສ່ປັບປຸງເພື່ອໃຫ້ສອດຄ່ອງກັບສະພາບການທີ່ມີການຫັນປ່ຽນຢ່າງໄວວາ ໂດຍສະເພາະທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ຊຶ່ງກະທົບໂດຍກົງຕໍ່ການພັດທະນາ ແລະ ການເຕີບໂຕຂອງເສດຖະກິດ-ສັງຄົມ ຂອງປະເທດເຮົາ. ກະແສໂລກາພິວັດ, ການເປີດຕະຫລາດເສລີທາງການຄ້າ ( AFTA) ໃນປີ 2008, ການຕໍ່ສູ້ເພື່ອໃຫ້ ສປປ ລາວ ຫລຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາ ໃນປີ 2020, ນະໂຍບາຍ ການຫັນເປັນອຸດສາຫະກຳ ແລະ ທັນສະໃໝ ຂອງລັດຖະບານເຮົາ ເປັນສິ່ງທ້າທາຍທີ່ໃຫຍ່ຫລວງສຳລັບວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນປະເທດເຮົາ. ສັງລວມແລ້ວ ການພັດທະນາ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຍັງຈະສືບຕໍ່ປະເຊີນ ກັບບັນຫາຫລາຍດ້ານ ຊຶ່ງສັງລວມໂດຍຫຍໍ້ດັ່ງນີ້:

- ຈຳນວນຜູ້ຮຽນຈົບສາມັນສຶກສາລະດັບຕ່າງໆເພີ່ມຂຶ້ນ, ການສະໜອງບ່ອນຮຽນບໍ່ພຽງພໍ, ຊາວໜຸ່ມຈຳນວນຫລວງຫລາຍ ໂດຍສະເພາະບັນດາແຂວງຊາຍແດນ ຂ້າມໄປຊອກວຽກເຮັດງານທຳ ທັງຖືກກົດໝາຍ ແລະ ບໍ່ຖືກກົດໝາຍ ໃນບັນດາປະເທດທີ່ໃກ້ຄຽງ ດ້ວຍຄ່າແຮງງານຕໍ່າ ຊຶ່ງເຮັດໃຫ້ມີບັນຫາສັງຄົມຕາມມາ.
- ຈຳນວນຜູ້ທີ່ສົນໃຈເຂົ້າຮຽນໃນສາຍອາຊີວະສຶກສາ ແລະອົບຮົມວິຊາຊີບມີໜ້ອຍ. ຍິ່ງໄປກ່ວານັ້ນສັງຄົມໂດຍທົ່ວໄປແມ່ນສົ່ງເສີມການສຶກສາຊັ້ນສູງຫລາຍກ່ວາແລະຕ້ອງການຮັບແຕ່ຜູ້ທີ່ຮຽນຈົບຊັ້ນສູງຂຶ້ນໄປເຂົ້າເຮັດວຽກງານຈຶ່ງເຮັດໃຫ້ການສ້າງກຳລັງແຮງງານບໍ່ໄປຕາມຮູບທາດຊຶ່ງບໍ່ສອດຄ່ອງກັບຄວາມຕ້ອງການແຮງງານຕົວຈິງກໍຄືຍຸດທະສາດເພື່ອພັດທະນາເສດຖະກິດ ແລະ ສັງຄົມແຫ່ງການພັດທະນາ ແລະໂຄງປະກອບເສດຖະກິດຂອງປະເທດ
- ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ເປັນວຽກງານທີ່ຕ້ອງໄດ້ລົງທຶນຫລາຍ ເມື່ອທຽບໃສ່ວຽກສາມັນສຶກສາໂດຍສະເພາະໃນຍຸກທີ່ເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີ ມີການ

ພັດທະນາຢ່າງໄວວາ ແຕ່ງົບປະມານທີ່ສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບໃນໄລຍະຜ່ານແມ່ນມີຈຳກັດ.

- ອາຄານສະຖານທີ່, ໂຮງຊ່າງຝຶກຫັດ ຂອງໂຮງຮຽນ/ ສູນຝຶກອົບຮົມວິຊາຊີບ ຈຳນວນໜຶ່ງ ບໍ່ໄດ້ມາດຖານ ໂດຍສະເພາະຢູ່ໃນໂຮງຮຽນຂອງລັດທີ່ສ້າງຂຶ້ນໃໝ່ໃນບາງແຂວງ ແລະ ບາງໂຮງຮຽນອາຊີວະສຶກສາ\ ສູນຝຶກອົບຮົມວິຊາຊີບຂອງພາກເອກະຊົນ ຍັງຂາດແຄນປຶ້ມຕຳລາ, ອຸປະກອນການຮຽນ - ການສອນ, ເຄື່ອງຈັກ- ເຄື່ອງມື ແລະ ວັດສະດຸຝຶກຫັດຢ່າງຫລວງຫລາຍ.
- ການພັດທະນາຫລັກສູດອາຊີວະສຶກສາແບບເຊື່ອມຕໍ່ ແຕ່ຂັ້ນພື້ນຖານຫາຂັ້ນຕົ້ນ, ຂັ້ນກາງ ແລະ ຂັ້ນສູງ ເປັນວຽກງານຫນຶ່ງທີ່ສຳຄັນ ແຕ່ກົງກັນຂ້າມ ນັກວິຊາການໃນຫນ້າວຽກນີ້ ຍັງຂາດເຂີນ ຈຶ່ງເຮັດໃຫ້ການພັດທະນາມີຄວາມຊັກຊ້າຫລາຍ.
- ຂະບວນການຮຽນ-ການສອນ ຍັງເປັນແບບປະເພນີດັ່ງເດີມ ໝາຍຄວາມວ່າ ນັກຮຽນຍັງບໍ່ທັນເປັນຈຸດໃຈກາງຂອງຂະບວນການຮຽນຮູ້, ຄູ-ອາຈານສ່ວນຫລາຍເປັນຄູໃໝ່, ຂາດປະສົບການ ແລະ ບໍ່ໄດ້ຜ່ານການຮຽນເປັນຄູ ຫລື ຝຶກອົບຮົມວິຊາຄູອາຊີວະສຶກສາມາກ່ອນ.
- ຂາດປະສົບການໃນການຈັດຕັ້ງປະຕິບັດລະບົບອາຊີວະສຶກສາ ແລະ ອົບຮົມວິຊາຊີບໃນລະດັບແຂວງ (ພະແນກສຶກສາແຂວງ, ພະແນກແຮງງານແຂວງ, ການຮ່ວມມືພາກລັດ ແລະເອກະຊົນໃນລະດັບແຂວງ) ໂດຍສະເພາະໃນແຂວງທີ່ມີການສ້າງຕັ້ງໂຮງຮຽນໃໝ່, ຂາດປະສົບການໃນການຈັດຕັ້ງການຮຽນ-ການສອນໃນລະບົບອາຊີວະສຶກສາແບບປະສົມ ແລະ ການຝຶກອົບຮົມວິຊາຊາຊີບແບບມີສ່ວນຮ່ວມ.

## 2.3 <u>ຈຸດດີ, ຈຸດອ່ອນ ແລະ ສາເຫດ</u>

### 2.3.1 ຈຸດດີ ແລະ ສາເຫດ

- ມີເອກະສານຍຸດທະສາດ, ເອກະສານນິຕິກຳ, ລະບຽບຫລັກການໃນການຄຸ້ມຄອງມະຫາພາກ, ແຜນພັດທະນາການສຶກສາ/ ອາຊີວະສຶກສາ ທັງໄລຍະຍາວ, ກາງ ແລະ ແຜນການປະຈຳປີ ທີ່ເປັນພື້ນຖານໃຫ້ກະຊວງສຶກສາທິການ ເຮັດໜ້າທີ່ໃຈກາງໃນການຄຸ້ມຄອງມະຫາພາກ ແລະ ປະສານງານໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
- ມີສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ(ສອຊ) ແລະ ໜ່ວຍງານກ່ຽວຂ້ອງ (ຫ້ອງການປະຈຳ ສອຊ, ໜ່ວຍງານກຸ່ມອາຊີບ) ໄດ້ລິເລີ່ມການເຮັດໜ້າທີ່ປະສານງານ/ ຮ່ວມມືພາກລັດ ແລະ ພາກເອກະຊົນໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ເປັນຕົ້ນໄດ້ຮ່ວມກັນພັດທະນາມາດຖານອາຊີບ ແລະ ຫລັກສູດທີ່ກ່ຽວຂ້ອງຈຳນວນໜຶ່ງ ແລະ ການກະກຽມການຝຶກອົບຮົມວິຊາຊີບແບບມີສ່ວນຮ່ວມ.
- ມີໂຮງຮຽນອາຊີວະສຶກສາ/ ສູນຝຶກອົບຮົມວິຊາຊີບ ຢູ່ໃນແຂວງຕ່າງໆ ຊຶ່ງຈະເປັນບ່ອນລິເລີ່ມດຳເນີນການຝຶກອົບຮົມວິຊາຊີບແບບປະສົມ.
- ມີສູນພັດທະນາອາຊີວະສຶກສາ/ ສູນພັດທະນາການສຶກສານອກລະບົບໂຮງຮຽນ ເຮັດພາລະບົດບາດໃນການພັດທະນາຫລັກສູດ, ສື່ການຮຽນ-ການສອນ, ກໍ່ສ້າງ ແລະ ບຳລຸງຍົກລະດັບ

ຜູ້ບໍລິຫານໂຮງຮຽນ, ຄູ-ອາຈານ ແລະ ບຸກຄະລາກອນອາຊີວະສຶກສາໃນສາຍງານທີ່ກ່ຽວຂ້ອງຢ່າງເປັນປົກກະຕິ.

– ມີໂຄງການຮ່ວມມືກັບຕ່າງປະເທດ ກໍ່ຄືອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມໃນປະເທດ ທີ່ກໍາລັງດໍາເນີນງານ ແລະ ຢູ່ໃນຂັ້ນວາງແຜນຮ່ວມມື ໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນຂອບເຂດທົ່ວປະເທດ.

– ສາເຫດທີ່ພາໃຫ້ມີຈຸດດີ (1) ພັກ ແລະ ລັດຖະບານ ໄດ້ເຫັນຄວາມສໍາຄັນຂອງການພັດທະນາ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ, (2) ມີໂຄງການຮ່ວມມື, (3) ມີການປະກອບສ່ວນຂອງພາກສ່ວນເສດຖະກິດ (ສະພາການຄ້າ-ອຸດສາຫະກໍາ, ວິສາຫະກິດ) ແລະອົງການຈັດຕັ້ງ ສັງຄົມ ທັງພາກລັດ ແລະ ພາກເອກະຊົນ.

### 2.3.2 <u>ຈຸດອ່ອນ ແລະ ສາເຫດ</u>

– ໂອກາດເຂົ້າຮັບການຝຶກອົບຮົມຂອງແມ່ຍິງ, ຜູ້ທຸກຍາກ, ຜູ້ພິການ, ຜູ້ດ້ອຍໂອກາດ ແລະຊົນເຜົ່າ ທີ່ຢູ່ເຂດຊົນນະບົດຫ່າງໄກສອກຫລີກມີໜ້ອຍ ຍ້ອນຄວາມທຸກຍາກ, ຮີດຄອງປະເພນີ ແລະ ຢູ່ຫ່າງໄກຈາກບ່ອນຮຽນ.

– ຂາດການແນະແນວວິຊາຊີບ, ຂາດການຕິດຕາມຜູ້ຮຽນຈົບ ແລະ ຂາດການໃຫ້ຄໍາປຶກສາອາຊີບ ເພື່ອກະກຽມເຂົ້າສູ່ວຽກງານ ຢ່າງເປັນລະບົບ.

– ຄຸນນະພາບການຝຶກອົບຮົມເວົ້າລວມແລ້ວຍັງຕໍ່າ ຍ້ອນຫລາຍສາເຫດເຊັ່ນ: ງົບປະມານການລົງທຶນຂອງລັດບໍ່ພຽງພໍ, ສື່ການຮຽນ-ການສອນ ແລະ ຕໍາລາຮຽນເປັນພາສາລາວຍັງຂາດຄຸນນະພາບ ແລະ ບໍ່ພຽງພໍ, ໂຮງຮຽນບາງບ່ອນບໍ່ມີໂຮງຊ່າງ/ຫ້ອງຝຶກງານ, ການສະໜອງເຄື່ອງຈັກ-ເຄື່ອງມື ແລະ ວັດສະດຸຮັບໃຊ້ໃນການຝຶກຫັດບໍ່ໄດ້ຕາມຄວາມຕ້ອງການຂັ້ນຕໍ່າສຸດ, ຂາດສູນຂໍ້ມູນຂ່າວສານ/ ຫ້ອງສະໝຸດ ແລະ ຂາດງົບປະມານ ສໍາລັບບູລະນະຮັກສາ, ອຸປະກອນເຕັກນິກທີ່ມີຢູ່ແລ້ວໃນຫລາຍໂຮງຮຽນແມ່ນຫລ້າສະໄໝ, ອາຄານ, ສະຖານທີ່, ສະຖາບັນ/ ສູນ/ ໂຮງຮຽນ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ທັງພາກລັດ ແລະ ເອກະຊົນ. ດ້ວຍເຫດນັ້ນ ມີບາງສະຖາບັນຈຶ່ງໄດ້ດໍາເນີນການສ້າງລາຍຮັບວິຊາການ ໂດຍເລັ່ງໃສ່ແຕ່ດ້ານປະລິມານ ໂດຍບໍ່ຄໍານຶງ ເຖິງຄຸນນະພາບ, ມາດຖານ, ຄວາມອາດສາມາດຮອງຮັບຂອງໂຮງຮຽນ ແລະ ຄວາມຕ້ອງການຂອງການພັດທະນາ ເສດຖະກິດ-ສັງຄົມ.

– ຂາດມາດຖານອາຊີບໃນຫລາຍສາຂາອາຊີບ ທີ່ເປັນເອກະສານອ້າງອີງທີ່ຈໍາເປັນສໍາລັບການພັດທະນາຫລັກສູດ, ຂາດການຊຸກຍູ້/ ສິ່ງເສີມໃຫ້ພາກສ່ວນທຸລະກິດ ຫລື ຜູ້ປະກອບການ ມີສ່ວນຮ່ວມໃນວຽກງານ ດັ່ງກ່າວ.

– ຄຸນນະພາບຂອງຄູອາຊີວະສຶກສາ ແລະ ອົບຮົມວິຊາຊີບ ສ່ວນໃຫ່ຍຍັງຕໍ່າ, ຂາດປະສົບການຕົວຈິງດ້ານວິຊາສະເພາະ ຍ້ອນວ່າບໍ່ເຄີຍເຮັດວຽກງານຕົວຈິງຢູ່ສະຖານປະກອບການມາກ່ອນ. ສ່ວນໃຫ່ຍຈະເປັນ ຜູ້ຈົບຈາກ ໂຮງຮຽນແລ້ວມາເປັນຄູໂດຍບໍ່ຜ່ານການຝຶກວິຊາຄູອາຊີວະສຶກສາ.

- ຂາດລະບົບການຮັບປະກັນຄຸນນະພາບ ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ແລະ ຂາດການຕິດຕາມ, ກວດກາ ແລະ ປະເມີນຜົນການຝຶກອົບຮົມທັງພາຍນອກ ແລະ ພາຍໃນ ຢ່າງເປັນລະບົບ.
- ການປະສານງານກ່ຽວກັບການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບລະຫວ່າງ ກະຊວງສຶກສາທິການ, ກະຊວງແຮງງານ, ກະຊວງວິຊາການຕ່າງໆ ຢູ່ໃນຂອບເຂດຂອງສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ ຍັງປະຕິບັດບໍ່ໄດ້ດີ, ຂາດການປະສານສົມທົບກັນ ລະຫວ່າງ ໂຄງການຕ່າງໆທີ່ສະໜັບສະໜູນວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

## 2.4 <u>ຖອດຖອນບົດຮຽນ</u>

1) ເພີ່ມທະວີບົດບາດຂອງສະພາທີ່ປຶກສາອາຊີວະສຶກສາແຫ່ງຊາດ (ສອຊ) ເພື່ອໃຫ້ເປັນອົງກອນທີ່ຊຸກຍູ້ ການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ສອດຄ່ອງກັບການພັດທະນາເສດຖະກິດ- ສັງຄົມຂອງປະເທດ ໂດຍສະເພາະແມ່ນຄວາມຕ້ອງການທາງດ້ານປະລິມານ ແລະ ຄຸນນະພາບ ຂອງຕະຫລາດແຮງງານ ໃນປັດຈຸບັນ ແລະ ໃນອະນາຄົດ, ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາດັ່ງກ່າວ ແລະ ໜ່ວຍງານສະໜັບສະໜູນທາງດ້ານວິຊາການ ທີ່ເປັນອົງການປະສານງານການຮ່ວມມືພາກລັດ-ເອກະຊົນ ໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
2) ເພີ່ມທະວີ ແລະ ຍົກສູງບົດບາດການຄຸ້ມຄອງມະຫາພາກ ແລະ ການປະສານງານຂອງກະຊວງສຶກສາທິການ ກັບພາກສ່ວນຄຸ້ມຄອງ/ ສະໜອງອາຊີວະສຶກສາ ແລະ ອົບຮົມວິຊາຊີບ ອື່ນໆ.
3) ເພີ່ມທະວີຄວາມເປັນເຈົ້າການ ຂອງບັນດາພາກສ່ວນຄຸ້ມຄອງ ແລະ ສະໜອງອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນການປະຕິບັດຂໍ້ກຳນົດ, ກົດລະບຽບ ແລະ ບັນດາຫລັກການຕ່າງໆ ຢ່າງເຂັ້ມງວດ.
4) ໃນການລົງທຶນໃສ່ການກໍ່ສ້າງ, ປັບປຸງ ແລະ ຂະຫຍາຍໂຮງຮຽນອາຊີວະສຶກສາ/ ສູນຝຶກອົບຮົມວິຊາຊີບທັງໃນ ແລະ ນອກລະບົບໂຮງຮຽນ ຢູ່ແຕ່ລະແຫ່ງ ຕ້ອງຄຳນຶງເຖິງຄວາມຕ້ອງການຕົວຈິງຂອງຄວາມຕ້ອງການຂອງຕະລາດແຮງງານ ແລະ ທ່າແຮງຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ໃນແຂວງຫຼືທ້ອງຖິ່ນນັ້ນ.
5) ການກໍ່ສ້າງ ແລະ ຂະຫຍາຍໂຮງຮຽນອາຊີວະສຶກສາ/ສູນຝຶກອົບຮົມວິຊາຊີບ ຄວນຄວບຄູ່ໄປກັບການກໍ່ສ້າງ ແລະ ຍົກລະດັບຜູ້ບໍລິຫານ, ຄູ-ອາຈານ ແລະ ພະນັກງານທີ່ກ່ຽວຂ້ອງ.
6) ສ້າງຕາຂ່າຍຮ່ວມມືແລະສ້າງເງື່ອນໄຂໃຫ້ບັນດາຜູ້ສະໜອງ ແລະ ຜູ້ບໍລິຫານໂຮງຮຽນ/ສູນອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໄດ້ມີການແລກປ່ຽນປະສົບການ ແລະ ຖອດຖອນບົດຮຽນໃນການບໍລິຫານ- ການຈັດການ ເພື່ອປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງຂອງການຝຶກອົບຮົມ.
7) ພາກສ່ວນຄຸ້ມຄອງອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຕ້ອງເປັນເຈົ້າການໃນການຕິດຕາມ, ກວດກາ ແລະ ປະເມີນຜົນ ການຝຶກອົບຮົມຢ່າງເປັນປົກກະຕິ.
8) ສືບຕໍ່ການຍາດແຍ່ງການຊ່ວຍເຫລືອຈາກຕ່າງປະເທດ ຢ່າງເປັນເຈົ້າການ ແລະ ເຮັດໃຫ້ການຮ່ວມມືໃນຂົງເຂດອາຊີວະສຶກສາ ແລະ ອົບຮົມວິຊາຊີບ ປະສົບຜົນສຳເລັດຕາມຈຸດປະສົງ, ລະດັບ

ຄາດໝາຍ ແລະ ເຮັດໃຫ້ໂຄງການຮ່ວມມືຕ່າງໆ ທີ່ຈັດຕັ້ງປະຕິບັດມີຜົນສຳເລັດ ແລະ ສືບຕໍ່ພັດທະນາຢ່າງຍືນຍົງ.

9) ຄວນນຳເອົາວິຊາເຕັກໂນໂລຊີຂໍ້ມູນຂ່າວສານ, ວິຊາແນວຄິດປະກອບການ ແລະ ວິຊາສິ່ງແວດລ້ອມ ເຂົ້າໃນຫລັກສູດອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

# ພາກທີ II

# ແຜນຍຸດທະສາດການພັດທະນາອາຊີວະສຶກສາແລະອົບຮົມວິຊາຊີບ ແຕ່ນີ້ຮອດປີ 2020

## 1 ສະພາບລວມ

ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາເວົ້າລວມ ແລະ ເວົ້າສະເພາະ ການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບແມ່ນສືບຕໍ່ດຳເນີນໄປ ໃນທ່າມກາງທີ່ພັກ ແລະ ລັດຖະບານ ພວມຜັນຂະຫຍາຍມະຕິ VIII ຂອງຄະນະບໍລິຫານງານຂອງສູນກາງພັກ, ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VI ແລະ ແຜນຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ ແນໃສ່ເພື່ອນຳພາປະເທດຊາດ ໃຫ້ຫຼຸດພົ້ນອອກຈາກສະພາວະຄວາມເປັນປະເທດດ້ອຍພັດທະນາ ໃນປີ 2020 ແລະ ກ້າວໄປສູ່ການຫັນເປັນ ອຸດສະຫະກຳ ແລະ ທັນສະໄໝ.

ການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຢູ່ ສປປ ລາວ ໃນປະຈຸບັນມີປັດໃຈຍູ້ໜູນໃນຫຼາຍດ້ານ ເຊັ່ນ: ປະເທດຊາດເຮົາມີຄວາມສະຫງົບຂັ້ນພື້ນຖານ, ການເຕີບໂຕທາງດ້ານເສດຖະກິດ ມີຄວາມຕໍ່ເນື່ອງໃນລະດັບ 6.1%, ໂຄງການພັດທະນາອຸດສາຫະກຳຂະໜາດໃຫຍ່ ເຊັ່ນ: ໄຟຟ້ານ້ຳຕົກ ແລະ ບໍ່ແຮ່ ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ, ການສົ່ງເສີມທຸລະກິດ ຂະໜາດນ້ອຍ, ຂະໜາດກາງ ແລະ ການພັດທະນາອົງກອນພາກເອກະຊົນຂະຫຍາຍຕົວໄວ. ນອກຈາກນັ້ນ ການລົງທຶນພາຍໃນ ແລະ ການລົງທຶນຂອງຕ່າງປະເທດ ໃນຂົງເຂດຕ່າງໆເພີ່ມຂຶ້ນ, ການພັດທະນາຊັບພະຍາກອນມະນຸດ, ການນຳໃຊ້ ແລະ ພັດທະນາວິທະຍາສາດເຕັກໂນໂລຊີ ເປັນໄປຢ່າງແຜ່ຫລາຍ, ພື້ນຖານໂຄງລ່າງມີການ ພັດທະນາໃນຈັງຫວະທີ່ໄວສົມຄວນ. ແຕ່ສິ່ງທີ່ສຳຄັນທີ່ສຸດ ແມ່ນພັກ ແລະ ລັດຖະບານ ໄດ້ມີແນວທາງນະໂຍບາຍ ທີ່ຖືກຕ້ອງ ເໝາະສົມ ກັບຍຸກສະໄໝ.

ຄຽງຄູ່ກັນນັ້ນ ການພັດທະນາວຽກງານອາຊີວະສຶກສາແລະອົບຮົມວິຊາຊີບໃນປະເທດເຮົາ ຍັງມີຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ ທັງພາຍໃນ ແລະ ພາຍນອກ ເປັນຕົ້ນ ຄຸນນະພາບ ຂອງການສຶກສາໃນເຂດຊົນນະບົດ ຍັງຕ່ຳ, ຄ່າຄອງຊີບສູງຂຶ້ນ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະແມ່ນພະນັກງານ, ນັກສຶກສາ ມີຄວາມຝືດເຄືອງ. ນອກຈາກນັ້ນກໍມີ ການປ່ຽນແປງຢ່າງໄວວາທາງດ້ານເຕັກໂນໂລຊີໃນຍຸກໂລກາພິວັດ ແລະການປ່ຽນແປງດ້ານໂຄງສ້າງຂອງເສດຖະກິດໃນປະເທດ ແລະພາກພື້ນ ໂດຍສະເພາະການກະກຽມການເປີດການຄ້າເສລີໃນຊຸມປີຕໍ່ໜ້າ. ສິ່ງດັ່ງກ່າວ ຈະສົ່ງຜົນສະທ້ອນໃສ່ການລົງທຶນເຂົ້າໃນຂະແໜງການສຶກສາເວົ້າລວມ ແລະ ເວົ້າສະເພາະແມ່ນການລົງທຶນທີ່ມີມູນຄ່າສູງເຂົ້າໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຊຶ່ງຈະສ້າງຄວາມຫຍຸ້ງຍາກ ໃຫ້ການຈັດຕັ້ງປະຕິບັດແຜນງານອາຊີວະສຶກສາ ແລະ ອົບຮົມວິຊາຊີບພໍສົມຄວນ.

ສະຫລຸບແລ້ວ ໃນໄລຍະຊຸມປີຕໍ່ໜ້ານີ້ ການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຈະໄດ້ປະເຊີນໜ້າກັບສິ່ງທ້າທາຍຫລາຍດ້ານ ຊຶ່ງເປັນທັງໂອກາດ ແລະອຸປະສັກທີ່ຜູ້ບໍລິຫານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຈະຕ້ອງໄດ້ພ້ອມພາກັນສູ້ຊົນຜ່ານຜ່າ ແລະ ຮັບປະກັນຜົນສຳເລັດ.

## 2. ວິໄສທັດ ແລະ ຄາດໝາຍລວມ

**ອາຊີວະສຶກສາ ແລະ ອົບຮົມວິຊາຊີບ** ແມ່ນພາກສ່ວນໜຶ່ງທີ່ສຳຄັນຂອງລະບົບການສຶກສາແຫ່ງຊາດ, ເປັນພາຫະນະເພື່ອກະກຽມສ້າງວິຊາຊີບ ແນໃສ່ປະກອບສ່ວນກໍ່ສ້າງ ແລະ ອົບຮົມນັກວິຊາການ ແລະ ນາຍຊ່າງລະດັບຕ່າງໆ ໃຫ້ມີຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ ແລະ ທັດສະນະຄຸນສົມບັດທີ່ດີ.

### 2.1 ວິໄສທັດ

- ກໍ່ສ້າງກຳລັງແຮງງານ ໃຫ້ເປັນພົນລະເມືອງດີ, ມີຄວາມຮູ້ ແລະ ມີວິຊາຊີບ, ສາມາດປະກອບການ, ມີຄວາມສາມາດປະດິດສ້າງ ແລະ ມີຄວາມກະຕືລືລົ້ນ ຕໍ່ການສ້າງສາພັດທະນາປະເທດຊາດ ກໍ່ຄືພັດທະນາຕົນເອງ, ມີພະລານາໄມສົມບູນ ແລະ ມີຄຸນສົມບັດສິນທຳປະຕິວັດປອດໄສ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດຊາດ.

- ພັດທະນາກຳລັງແຮງງານໃຫ້ສອດຄ່ອງກັບທ່າແຮງເຂດແຄ້ວນ, ບໍລິເວນ ແລະ ຕິດພັນກັບຊີວິດຕົວຈິງຂອງການດຳລົງຊີວິດຂອງປະຊາຊົນ ແລະ ສອດຄ່ອງກັບໂຄງປະກອບເສດຖະກິດຂອງປະເທດ ໂດຍອີງໃສ່ຄວາມອາດສາມາດບົ່ມຊ້ອນ ແລະ ທ່າແຮງພູມປັນຍາຂອງປະເທດຊາດ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານຂອງພາຍໃນ ແລະ ຕ່າງປະເທດກໍ່ຄືຄວາມຮຽກຮ້ອງຕ້ອງການຂອງການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ.

- ພັດທະນາຂະແໜງວິຊາ ໃຫ້ສອດຄ່ອງກັບທ່າແຮງ ຂອງການພັດທະນາເສດຖະກິດ ແລະ ເຂດແຄ້ວນ ໂດຍມີຈຸດສຸມເຊັ່ນ: ຂະແໜງກະສິກຳ-ປ່າໄມ້, ອຸດສາຫະກຳປຸງແຕ່ງ, ຂະແໜງໄຟຟ້າໂດຍສະເພາະແມ່ນໄຟຟ້ານ້ຳຕົກ, ການບໍລິການທາງຜ່ານ, ການທ່ອງທ່ຽວ ແລະ ຂະແໜງບໍ່ແຮ່ ເພື່ອສ້າງໂຄງປະກອບເສດຖະກິດກະສິກຳ-ປ່າໄມ້ຕິດພັນກັບອຸດສາຫະກຳ ແລະ ການບໍລິການ.

### 2.2 ຄາດໝາຍລວມ

- ສ້າງຕັ້ງໂຮງຮຽນເຕັກນິກ-ວິຊາຊີບ ແລະ ສູນຝຶກອົບຮົມວິຊາຊີບ ໃຫ້ມີຢູ່ໃນທຸກໆແຂວງ ຢ່າງໜ້ອຍ 1 ແຫ່ງ ແລະ ບາງເມືອງທີ່ມີເງື່ອນໄຂ; ປັບປຸງ ແລະ ຂະຫຍາຍບັນດາໂຮງຮຽນ ເຕັກນິກ-ວິຊາຊີບ, ສູນຝຶກອົບຮົມວິຊາຊີບ ແລະ ສູນພັດທະນາສີມືແຮງງານທີ່ມີຢູ່ແລ້ວ; ຍົກລະດັບໂຮງຮຽນເຕັກນິກ-ວິຊາຊີບ ໃນບາງແຂວງທີ່ມີເງື່ອນໄຂຄວາມສາມາດເປັນວິທະຍາໄລ ເພື່ອສະໜອງການຝຶກອົບຮົມໃນລະດັບຕ່າງໆດ້ວຍຫຼາຍຮູບແບບແຊັ່ນ: ການຝຶກອົບຮົມໄລຍະສັ້ນ, ໄລຍະຍາວ, ພາກກາງເວັນ, ພາກຄ່ຳ, ຮຽນເຕັມເວລາ ແລະ ຮຽນບາງເວລາ.
- ຂະຫຍາຍໂອກາດເຂົ້າຮຽນອາຊີວະສຶກສາ ແລະ ອົບຮົມວິຊາຊີບໃຫ້ໄດ້ 60% ຂອງຈຳນວນຜູ້ຈົບສາມັນສຶກສາຊັ້ນຕ່າງໆໃນຂອບເຂດທົ່ວປະເທດ ພ້ອມກັນນັ້ນ ກໍ່ເອົາໃຈໃສ່ຜູ້ທີ່ທຸກຍາກຂາດເຂີນ, ເພດຍິງ, ຊົນເຜົ່າ ແລະ ຄົນພິການ.
- ພັດທະນາ ແລະ ຈັດວາງລະບົບ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ສອດຄ່ອງກັບແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດໂດຍມີການສ້າງສາລະບານອາຊີບ,ມາດຖານອາຊີບ ແລະ ຫຼັກສູດ; ນຳໃຊ້ລະບົບ ໂມດູນ ແລະ ໜ່ວຍກິດ ເພື່ອເອື້ອອຳນວຍໃຫ້ແກ່ການຫຼຽນໂອນ, ຕໍ່ເນື່ອງ ຫຼື ເຊື່ອມຕໍ່ລະດັບຕ່າງໆ; ນຳເອົາວິຊາເຕັກໂນໂລຊີສື່ສານ, ຄວາມຮູ້ກ່ຽວກັບການ

ບໍລິຫານທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ແລະ ຄວາມຮູ້ກ່ຽວກັບສິ່ງແວດລ້ອມເຂົ້າ ໃນ ຫຼັກສູດສາຍ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຢ່າງເປັນລະບົບ.

- ນຳເອົາວິຊາຊີບເຂົ້າໃນຫຼັກສູດສາມັນສຶກສາ ແລະ ທົດລອງຢູ່ໃນບັນດາໂຮງຮຽນສາມັນ ທີ່ມີເງື່ອນໄຂ.
- ຈັດຕັ້ງການແນະແນວວິຊາຊີບເພື່ອສ້າງຄວາມສົນໃຈໃຫ້ນັກຮຽນເຂົ້າຮຽນວິຊາຊີບ ແລະ ໃຫ້ຄຳປຶກສາວິຊາຊີບແກ່ຜູ້ທີ່ຈະຮຽນຈົບສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ເພື່ອກະກຽມເຂົ້າສູ່ວຽກງານ.
- ກໍ່ສ້າງຄູອາຊີວະສຶກສາ ສຳລັບສາຂາວິຊາຕ່າງໆ (ວິຊາສະເພາະ ແລະ ວິຊາຄູ) ໃນລະດັບຕ່າງໆຢູ່ທັງພາຍໃນ ແລະ ຕ່າງປະເທດໃຫ້ສາມາດຕອບສະໜອງແກ່ສະຖານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນຂອບເຂດທົ່ວປະເທດ ໃຫ້ພຽງພໍຂັ້ນພື້ນຖານ; ບຳລຸງຄູທາງດ້ານວິຊາສະເພາະເຕັກນິກ ແລະ ວິຊາຄູ ແລະ ພັດທະນາຜູ້ບໍລິຫານ ແລະ ບຸກຄະລາກອນອາຊີວະສຶກສາ ຢ່າງເປັນປະຈຳ ເພື່ອໃຫ້ທັນດັບສະພາບການພັດທະນາເຕັກໂນໂລຊີຂໍ້ມູນ-ຂ່າວສານ.
- ສ້າງລະບົບປະກັນຄຸນນະພາບ ແລະ ການປະເມີນຜົນວຽກງານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງການກໍ່ສ້າງ ແລະ ອົບຮົມກຳລັງແຮງງານ.
- ປັບປຸງ ແລະ ຂະຫຍາຍບັນດາກົງຈັກຮັບຜິດຊອບການບໍລິຫານ-ຄຸ້ມຄອງສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ແຕ່ລະດັບສູນກາງຮອດແຂວງ ແລະ ບັນດາເມືອງທີ່ມີການພັດທະນາຈຳນວນໜຶ່ງ ເພື່ອເຮັດໜ້າທີ່ຄຸ້ມຄອງມະຫາພາກ ເປັນຕົ້ນແມ່ນກົມກອງ ແລະ ບັນດາພະແນກການໃນບັນດາກະຊວງຮັບຜິດຊອບ, ຂະແໜງອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນບັນດາພະແນກສຶກສາ, ພະແນກແຮງງານແຂວງ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.
- ກຳນົດນະໂຍບາຍ ແລະ ລະບຽບການຕ່າງໆແນໃສ່ຊຸກຍູ້ ແລະ ສົ່ງເສີມທຸກພາກສ່ວນຂອງສັງຄົມ ປະກອບສ່ວນ ໃນການພັດທະນາກຳລັງແຮງງານລາວ, ສົ່ງເສີມໃຫ້ນັກຮຽນຊົນເຜົ່າ ແລະ ຜູ້ດ້ອຍໂອກາດທີ່ທຸກຍາກຂາດເຂີນ ແລະ ຢູ່ເຂດພູດອຍຫ່າງໄກສອກຫຼີກໄດ້ເຂົ້າຮັບການຝຶກອົບຮົມ ໃນສະຖານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ, ຄົ້ນຄວ້າ ແລະ ປັບປຸງລະບຽບຫຼັກການໃນການສ້າງລາຍຮັບວິຊາການ, ການຜະລິດ, ການບໍລິການ, ການເກັບຄ່າຮຽນ ແລະ ລະບຽບການທີ່ຈຳເປັນອື່ນໆ.

## 3. ຍຸດທະສາດການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ

### 3.1 ຍຸດທະສາດການກໍ່ສ້າງ, ປັບປຸງ ແລະ ຂະຫຍາຍສະຖານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ

- ສ້າງຕັ້ງໂຮງຮຽນເຕັກນິກ-ວິຊາຊີບ ແລະ ສ້າງຕັ້ງສູນຝຶກອົບຮົມວິຊາຊີບໃນແຂວງ ແລະ ໃນຕົວເມືອງໃຫຍ່ທີ່ມີການພັດທະນາ.

- ປັບປຸງ ແລະ ຂະຫຍາຍໂຮງຮຽນເຕັກນິກ ແລະ ວິຊາຊີບທີ່ມີຢູ່ແລ້ວເປັນຕົ້ນແມ່ນການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ, ການປະກອບພື້ນຖານວັດຖຸ-ເຕັກນິກ ແລະ ສິ່ງອຳນວຍຄວາມສະດວກອື່ນໆ.

– ຍົກລະດັບໂຮງຮຽນເຕັກນິກ-ວິຊາຊີບໃນບາງແຂວງທີ່ມີເງື່ອນໄຂຄວາມສາມາດເປັນວິທະຍາໄລ ເຕັກນິກ ແນໃສ່ກໍ່ສ້າງນັກວິຊາການເຕັກນິກ ແລະ ວິຊາຊີບໃນລະດັບສູງ.

### 3.2 ຍຸດທະສາດ ການປະຕິຮູບ ລະບົບອາຊີວະສຶກສາ ແລະ ອົບຮົມວິຊາຊີບ

– ປັບປຸງລະບົບອາຊີວະສຶກສາ ແລະ ອົບຮົມວິຊາຊີບໃຫ້ຕິດພັນກັບການປະຕິຮູບ ການສຶກສາແຫ່ງຊາດ ໂດຍນໍາໃຊ້ວິທີການຝຶກອົບຮົມ ດ້ວຍຫຼາຍຮູບແບບ.

– ພັດທະນາ ແລະ ປັບປຸງຫຼັກສູດ, ຕໍາລາຮຽນ, ສື່ການຮຽນ-ການສອນ, ຄູ່ມືຄູ ແລະ ອຸປະກອນການສິດສອນ.

### 3.3. ຍຸດທະສາດການກໍ່ສ້າງ, ບໍາລຸງ ແລະ ພັດທະນາຄູ ແລະ ບຸກຄະລາກອນ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ

– ສ້າງແຜນກໍ່ສ້າງ, ບໍາລຸງ ແລະ ພັດທະນາຄູ ແລະ ບຸກຄະລາກອນ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ

– ຂະຫຍາຍສະຖາບັນສ້າງຄູອາຊີວະສຶກສາໄປສູ່ລະດັບພາກ ເພື່ອກໍ່ສ້າງຄູອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນລະດັບຕ່າງໆຕິດພັນກັບການຂະຫຍາຍສະຖານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

– ສ້າງຕາໜ່າງຮ່ວມມືໃນລະດັບພາກພື້ນ ແລະ ສາກົນ ເພື່ອແລກປ່ຽນບົດຮຽນ/ປະສົບການດ້ານ ວິຊາຊການ ແລະ ເພື່ອກໍ່ສ້າງ ແລະ ບໍາລຸງຄູອາຊີວະສຶກສາ.

### 3.4 ຍຸດທະສາດການປະກັນຄຸນນະພາບວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ

– ສ້າງມາດຖານຄູ ແລະ ບຸກຄະລາກອນອາຊີວະສຶກສາ.

– ສ້າງມາດຖານສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

– ປັບປຸງແລະພັດທະນາມາດຖານອາຊີບ ແລະ ການຝຶກອົບຮົມວິຊາຊີບ; ຈັດຕັ້ງການທົດສອບຄວາມສາມາດ, ທັກສະສີມື ແລະ ການຮັບຮອງຜົນການຮຽນ ຫຼື ປະສົບການໃນໄລຍະຜ່ານມາ.

### 3.5. ຍຸດທະສາດການພັດທະນາຂໍ້ມູນ-ຂ່າວສານອາຊີວະສຶກສາ ແລະ ອົບຮົມວິຊາຊີບ

– ສ້າງລະບົບຂໍ້ມູນ-ຂ່າວສານອາຊີວະສຶກສາ, ຈັດວາງຮູບແບບຖານຂໍ້ມູນ ເພື່ອສາມາດເຊື່ອມເຂົ້າກັບ ລະບົບຂໍ້ມູນ-ຂ່າວສານຂອງກະຊວງສຶກສາທິການ ຫຼື ກະຊວງແຮງງານ.

– ສຶກສາ, ວິໄຈຄວາມຕ້ອງການດ້ານການຝຶກອົບຮົມ ແລະ ຄວາມຈໍາເປັນໃນປັບປຸງ ແລະ ຍົກສູງຄຸນນະພາບ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ ຂອງການພັດທະນາເສດຖະກິດສັງຄົມ ໃນແຕ່ລະໄລຍະ.

- ສ້າງລະບົບລາຍງານປະຈຳປີ ກ່ຽວກັບວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
- ສ້າງລະບົບການຕິດຕາມຜູ້ຮຽນຈົບ ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

**3.6. ຍຸດທະສາດການປັບປຸງກົງຈັກການຄຸ້ມຄອງສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ**

- ປັບປຸງກົງຈັກການບໍລິຫານ-ຄຸ້ມຄອງມະຫາພາກ ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຂັ້ນກະຊວງ ໃຫ້ສອດຄ່ອງກັບບໍລິມາດຂອງວຽກງານ.
- ສ້າງຕັ້ງຂະແໜງການຮັບຜິດຊອບສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບຢູ່ໃນພະແນກສຶກສາ, ພະແນກແຮງງານ ແລະ ຂະແໜງການອື່ນໆຂອງແຂວງ/ນະຄອນຫຼວງ.
- ປັບປຸງກົງຈັກບໍລິຫານຂອງວິທະຍາໄລ, ໂຮງຮຽນອາຊີວະສຶກສາ ແລະ ສູນຝຶກອົບຮົມວິຊາຊີບ ໃຫ້ມີຄວາມເໝາະສົມກັບລະດັບ ແລະ ຂະໜາດຂອງໂຮງຮຽນ.

**3.7 ຍຸດທະສາດການສ້າງນະໂຍບາຍ ແລະ ເຄື່ອງມືຄຸ້ມຄອງມະຫາພາກ ໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ**

- ກຳນົດນະໂຍບາຍໃນການຊຸກຍູ້ ແລະ ສົ່ງເສີມຜູ້ມີພອນສະຫວັນ, ແມ່ຍິງ, ຜູ້ດ້ອຍໂອກາດ, ຄົນພິການ ແລະ ຊົນເຜົ່າທີ່ຢູ່ເຂດພູດອຍຫ່າງໄກສອກຫຼີກ.
- ກຳນົດນະໂຍບາຍຕໍ່ບຸກຄະລາກອນອາຊີວະສຶກສາ ທີ່ມີຜົນງານດີ ແລະ ຄຸນງາມຄວາມດີດ້ວຍມາດຕະການຕ່າງໆ.
- ກຳນົດນະໂຍບາຍກ່ຽວກັບການສົ່ງເສີມຫົວໜ່ວຍແຮງງານ/ທຸລະກິດທັງພາກລັດ ແລະ ພາກເອກະຊົນ, ຊຸມຊົນ ແລະ ພາກສ່ວນສັງຄົມອື່ນໆທີ່ປະກອບສ່ວນ ແລະ ລົງທຶນ ເຂົ້າໃນການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
- ສ້າງ ແລະ ປັບປຸງດຳລັດ, ຂໍ້ກຳນົດ ແລະ ລະບຽບການຕ່າງໆ ໃນການຄຸ້ມຄອງມະຫາພາກກໍ່ຄືລະບຽບຫຼັກການໃນການຄຸ້ມຄອງສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ; ຂໍ້ກຳນົດ ຫຼື ລະບຽບຫຼັກການໃນການສ້າງລາຍຮັບວິຊາການ.
- ອອກຂໍ້ກຳນົດໃນການຈັດສັນງົບປະມານສຳລັບການພັດທະນາວຽກງານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຈາກງົບປະມານຂອງລັດ, ບັນດາກອງທຶນ, ລາຍຮັບວິຊາການຂອງສະຖານສຶກສາ, ແລະ ການປະກອບສ່ວນຂອງສັງຄົມ, ຫົວໜ່ວຍທຸລະກິດທັງພາກລັດ ແລະ ພາກເອກະຊົນ ຕອບສະໜອງກັບຄວາມຕ້ອງການອັນຈຳເປັນຂອງການຝຶກອົບຮົມ.

# ພາກທີ III

# ແຜນດຳເນີນງານ ການພັດທະນາວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ແຕ່ນີ້ຮອດປີ 2010

**ຄາດໝາຍ:**

- ແຕ່ລະແຂວງໃຫ້ມີໂຮງຮຽນເຕັກນິກ-ວິຊາຊີບ/ ສູນຝຶກອົບຮົມວິຊາຊີບ ຢ່າງໜ້ອຍ 1 ແຫ່ງ.

- ຍົກລະດັບບາງໂຮງຮຽນວິຊາຊີບ-ເຕັກນິກໃຫ້ເປັນວິທະຍາໄລເຕັກນິກ ຫລື ວິທະຍາໄລ ອາຊີວະສຶກສາ ໃຫ້ໄດ້ຢ່າງ ຫນ້ອຍ 4 ແຫ່ງ.

- ໃນປີ 2010 ໃຫ້ມີບ່ອນຮຽນສາມາດຮອງຮັບນັກຮຽນເຂົ້າໃນໂຮງຮຽນເຕັກນິກ-ວິຊາຊີບ, ໂຮງຮຽນວິຊາຊີບແບບປະສົມໃຫ້ໄດ້ປີລະ 8,000 ຄົນ ແລະຝຶກໄລຍະສັ້ນໃຫ້ໄດ້ ປີລະ 2,000 ຄົນ, ຢູ່ໃນສູນນອກໂຮງຮຽນ ແລະ ສູນສຶກສາຊຸມຊົນໃນຂອບເຂດທົ່ວປະເທດ ແຕ່ລະປີໃຫ້ໄດ້ 3,000 ຄົນ, ຢູ່ສູນພັດທະນາສີມືແຮງງານ ແຕ່ລະປີໃຫ້ໄດ້ 5,000 ຄົນ, ການຝຶກອົບຮົມແບບມີ ສ່ວນຮ່ວມ ໃນກຸ່ມອາຊີບໂຮງແຮມ-ຮ້ານອາຫານ, ທ່ອງທ່ຽວ, ຫັດຖະກຳ, ອຸດສາຫະກຳປຸງແຕ່ງໄມ້ ແຕ່ລະປີໃຫ້ໄດ້ 200 ຄົນ.

- ສົ່ງເສີມແມ່ຍິງໃຫ້ເຂົ້າຮຽນສາຂາວິຊາຕ່າງໆໃນໂຮງຮຽນອາຊີວະສຶກສາຕ່າງໆຢ່າງໜ້ອຍ 40% ຂອງຈຳນວນນັກຮຽນວິຊາຊີບທັງໝົດ(ປະຈຸບັນປະມານ 30%) ແລະ ສ້າງເງື່ອນໄຂໃຫ້ ຜູ້ດ້ອຍໂອກາດ ແລະ ຄົນພິການ ໄດ້ຝຶກອົບຮົມວິຊາຊີບດ້ວຍຮູບແບບຕ່າງໆຫຼາຍຂຶ້ນ.

- ໃຫ້ຄູອາຊີວະສຶກສາລະດັບຕ່າງໆສະໜອງໃຫ້ແກ່ສະຖານອາຊີວະສຶກສາ ແລະ ອົບຮົມວິຊາ ຊີບ ໃຫ້ພຽງພໍຂັ້ນພື້ນຖານ.

- ມີມາດຖານອາຊີບ ແລະ ປັບປຸງຫຼັກສູດທີ່ກ່ຽວຂ້ອງໂດຍຈັດເປັນລະບົບໂມດູນ ແລະ ເປັນໜ່ວຍກິດ ທີ່ສາມາດຫຍຸບໂອນຕໍ່ເນື່ອງ ຫຼື ເຊື່ອມຕໍ່ ຢ່າງໜ້ອຍໃຫ້ໄດ້ 20 ສາຂາວິຊາ.

- ມີລະບົບປະກັນຄຸນນະພາບແລະ ການປະເມີນຜົນວຽກງານອາຊີວະສຶກສາ ແລະ ອົບຮົມວິ ຊາຊີບ ໃນລະດັບສູນກາງ ແລະ ແຂວງ.

- ມີກົງຈັກ ແລະ ກົນໄກທີ່ສອດຄ່ອງເພື່ອຄຸ້ມຄອງ ແລະ ບໍລິຫານວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

- ມີໜ່ວຍງານກຸ່ມອາຊີບ ທີ່ດຳເນີນການຝຶກອົບຮົມແບບມີສ່ວນຮ່ວມ ຢ່າງຫນ້ອຍ 4 ກຸ່ມ ອາຊີບ.

- ມີໜ່ວຍງານຄຸ້ມຄອງວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບໃນພະແນກການກ່ຽວ ຂ້ອງຂອງແຂວງ.

- ມີຂໍ້ກຳນົດ, ລະບຽບຫຼັກການ ໃນການຄຸ້ມຄອງວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

## 1. ແຜນງານຂະຫຍາຍໂອກາດເຂົ້າຮຽນ

<u>ໂຄງການທີ 1</u>: ກໍ່ສ້າງ, ປັບປຸງ ແລະ ຂະຫຍາຍສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ກິດຈະກຳ:

- ສ້າງຕັ້ງໂຮງຮຽນວິຊາຊີບ ຢູ່ແຂວງທີ່ຍັງບໍ່ທັນມີໂຮງຮຽນ ເຊັ່ນ: ແຂວງເຊກອງ ແລະສາລະວັນ.

- ປັບປຸງ ແລະຂະຫຍາຍໂຮງຮຽນວິຊາຊີບແບບປະສົມທີ່ສ້າງຕັ້ງຂຶ້ນແລ້ວ ເຊັ່ນ: ຢູ່ແຂວງຊຽງຂວາງ, ອຸດົມໄຊ, ບໍ່ແກ້ວ ໃຫ້ສຳເລັດ ໃນປີ 2008 ແລະໂຮງຮຽນວິຊາຊີບແບບປະສົມຂອງແຂວງຫົວພັນ, ໄຊຍະບູລີ, ຫລວງນ້ຳທາ ແລະຜົ້ງສາລີ ໃຫ້ສຳເລັດໃນປີ 2010 .

- ຍົກລະດັບໂຮງຮຽນເຕັກນິກ-ວິຊາຊີບ 4 ແຫ່ງ ໃຫ້ເປັນວິທະຍາໄລເຕັກນິກ ເຊັ່ນ: ເຕັກນິກປາກປ່າສັກ, ສະຫວັນນະເຂດ, ແຂວງວຽງຈັນ ແລະ ຈຳປາສັກ.

- ຂະຫຍາຍບາງສາຂາອາຊີບ ຢູ່ໃນໂຮງຮຽນທີ່ມີຄວາມພ້ອມ ໃນສາຂາອາຊີບພະລັງງານ, ບໍ່ແຮ່, ການຄຸ້ມຄອງທີ່ດິນ ແລະ ຊັບສິນ, ປົກປັກຮັກສາທຳມະຊາດ ແລະ ສິ່ງແວດລ້ອມ, ການທ່ອງທ່ຽວ, ການຄ້າ, ຄົມມະນາຄົມ, ຂົນສົ່ງ, ເຕັກໂນໂລຊີການສື່ສານ, ຫັດຖະກຳ, ອຸດສາຫະກຳປຸງແຕ່ງ, ການບໍລິການ ແລະ ອື່ນໆ ໃຫ້ໄດ້ຢ່າງຫນ້ອຍ 5 ແຫ່ງ.

- ດຳເນີນການຝຶກອົບຮົມໃນສູນນອກໂຮງຮຽນ ແລະ ສູນສຶກສາຊຸມຊົນ.

- ດຳເນີນການຝຶກອົບຮົມວິຊາຊີບ ແລະ ພັດທະນາສີມືແຮງງານ ເພື່ອສົ່ງອອກ (ພາກສ່ວນພັດທະນາສີມືແຮງງານ).

- ດຳເນີນການທົດລອງການຝຶກອົບຮົມແບບມີສ່ວນຮ່ວມລະຫວ່າງໂຮງຮຽນ ແລະ ສະຖານປະກອບການໃນ 4 ກຸ່ມອາຊີບ ເຊັ່ນ: ໂຮງແຮມ ແລະ ຮ້ານອາຫານ, ຕັດຫຍິບ, ຫັດຖະກຳ, ເຟີນີເຈີ.

<u>ໂຄງການທີ 2</u>: ສ້າງລະບົບອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ກິດຈະກຳ:

- ພັດທະນາລະບົບອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໂດຍການສະຫນອງການສຶກສາດ້ວຍຫລາຍຮູບແບບ ເຊັ່ນ: ຮູບແບບໃນ ແລະ ນອກໂຮງຮຽນ, ແບບມີສ່ວນຮ່ວມ, ແບບປະສົມ, ແບບອັດທະຍາໄສ, ການສຶກສາທາງໄກ ແລະ ການຮຽນຜ່ານ ສື່ເອເລັກໂຕຣນິກ.

- ສ້າງລະບົບການແນະແນວວິຊາຊີບ ແລະ ຈັດຕັ້ງການດຳເນີນການແນະແນວວິຊາຊີບໃນໂຮງຮຽນ ມັດທະຍົມຕອນຕົ້ນ ແລະ ຕອນປາຍ.

- ນຳເອົາວິຊາຊີບເຂົ້າໃນຫຼັກສູດສາມັນສຶກສາໃນລະດັບມັດທະຍົມຕອນຕົ້ນ ແລະ ຕອນປາຍ ໃນບ່ອນທີ່ມີເງື່ອນໄຂ.

- ພັດທະນາຫຼັກສູດອາຊີວະສຶກສາ ລະດັບຕ່າງໆ ເປັນລະບົບ ໂມດູນ, ຄິດໄລ່ເປັນໜ່ວຍກິດ.

- ນຳເອົາວິຊາເຕັກໂນໂລຊີການສື່ສານ, ວິຊາຄວາມຮູ້ດ້ານການປະກອບການ(SME) ແລະ ສິ່ງແວດລ້ອມ ເຂົ້າໃນຫຼັກສູດສາຍອາຊີວະສຶກສາ.

- ສ້າງປື້ມຄູ່ມື, ສື່ການຮຽນ-ການສອນ ແລະ ອຸປະກອນສຳລັບການຝຶກອົບຮົມວິຊາຊີບໃນຮູບແບບຕ່າງໆ.

2. <u>ແຜນງານປັບປຸງຄຸນະພາບ ແລະ ຄວາມສອດຄ່ອງ</u>

<u>ໂຄງການທີ 1</u>: ກໍ່ສ້າງ, ບຳລຸງ ແລະ ພັດທະນາຄູ ແລະ ບຸກຄະລາກອນອາຊີວະສຶກສາ ແລະ ອົບຮົມ ວິຊາຊີບ

ກິດຈະກຳ:

- ສ້າງແຜນກໍ່ສ້າງ, ບຳລຸງ ແລະ ພັດທະນາຄູ ແລະ ບຸກຄະລາກອນອາຊີວະສຶກສາ ແລະ ອົບຮົມ ວິຊາຊີບ.

- ຂະຫຍາຍສະຖາບັນສ້າງຄູອາຊີວະສຶກສາໄປສູ່ລະດັບພາກ ເພື່ອກໍ່ສ້າງຄູອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃນລະດັບຕ່າງໆ ຕິດພັນກັບການຂະຫຍາຍສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

- ສ້າງຕາໜ່າງຮ່ວມມືໃນລະດັບພາກພື້ນ ແລະ ສາກົນ ເພື່ອແລກປ່ຽນບົດຮຽນ/ປະສົບການ ດ້ານວິຊາການ ແລະ ເພື່ອກໍ່ສ້າງ ແລະ ບຳລຸງຄູອາຊີວະສຶກສາ.

<u>ໂຄງການທີ 2</u>: ການປະກັນຄຸນນະພາບ ຂອງວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ກິດຈະກຳ:

- ສ້າງມາດຖານຄູ ແລະ ບຸກຄະລາກອນອາຊີວະສຶກສາ.

- ສ້າງມາດຖານສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

- ປັບປຸງ ແລະ ພັດທະນາມາດຖານອາຊີບ ແລະ ການຝຶກອົບຮົມວິຊາຊີບ; ຈັດຕັ້ງການທົດສອບຄວາມສາມາດ, ທັກສະສີມື ແລະ ການຮັບຮອງຜົນການຮຽນ ຫຼື ປະສົບການໃນໄລຍະຜ່ານມາ.

ໂຄງການທີ 3: ພັດທະນາຂໍ້ມູນ-ຂ່າວສານອາຊີວະສຶກສາ ແລະ ອິບຮົມ ວິຊາຊີບ

- ສ້າງລະບົບຂໍ້ມູນ-ຂ່າວສານອາຊີວະສຶກສາ, ຈັດວາງຮູບແບບຖານຂໍ້ມູນ ເພື່ອສາມາດເຊື່ອມເຂົ້າກັບລະບົບຂໍ້ມູນ-ຂ່າວສານຂອງກະຊວງສຶກສາທິການ ຫຼື ກະຊວງແຮງງານ.
- ສຶກສາ/ວິໄຈຄວາມຕ້ອງການດ້ານການຝຶກອົບຮົມ ແລະ ຄວາມຈຳເປັນໃນການປັບປຸງ ແລະ ຍົກສູງຄຸນນະພາບອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ ຂອງການພັດທະນາເສດຖະກິດສັງຄົມ ໃນແຕ່ລະໄລຍະ.
- ສ້າງລະບົບລາຍງານປະຈຳປີ ກ່ຽວກັບວຽກງານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
- ສ້າງລະບົບການຕິດຕາມຜູ້ຮຽນຈົບ ໃນສາຍ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

## 3. ແຜນງານປັບປຸງບໍລິຫານ - ການຄຸ້ມຄອງ ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

ໂຄງການທີ 1: ປັບປຸງກົງຈັກການຄຸ້ມຄອງສາຍ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ກິດຈະກຳ:

- ປັບປຸງກົງຈັກການບໍລິຫານ-ຄຸ້ມຄອງມະຫາພາກ ໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຂັ້ນກະຊວງ ໃຫ້ສອດຄ່ອງກັບບໍລິມາດຂອງວຽກງານ.
- ສ້າງຕັ້ງຂະແໜງການຮັບຜິດຊອບສາຍ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຢູ່ໃນພະແນກສຶກສາ, ພະແນກແຮງງານ ແລະ ຂະແໜງການອື່ນໆຂອງແຂວງ/ນະຄອນຫຼວງ.
- ປັບປຸງກົງຈັກບໍລິຫານຂອງວິທະຍາໄລ, ໂຮງຮຽນອາຊີວະສຶກສາ ແລະ ສູນຝຶກອົບຮົມວິຊາຊີບ ໃຫ້ມີຄວາມເໝາະສົມກັບລະດັບ ແລະ ຂະໜາດຂອງໂຮງຮຽນ.
- ປັບປຸງພາລະບົດບາດຂອງສະພາທີ່ປຶກສາອາຊີວະສຶກສາ ແຫ່ງຊາດ ແລະ ອົງການທີ່ຮັບຜິດຊອບ ການປະສານງານ ແລະ ການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ ເພື່ອດຳເນີນການ ຝຶກອົບຮົມວິຊາຊີບຮູບແບບມີສ່ວນຮ່ວມ.

ໂຄງການທີ 2: ສ້າງນະໂຍບາຍ ແລະ ເຄື່ອງມືຄຸ້ມຄອງມະຫາພາກ ໃນການພັດທະນາ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ກິດຈະກຳ:

- ກຳນົດນະໂຍບາຍໃນການຊຸກຍູ້ແລະສົ່ງເສີມຜູ້ມີພອນສະຫວັນ, ແມ່ຍິງ, ຜູ້ດ້ອຍໂອກາດ, ຄົນພິການ ແລະ ຊົນເຜົ່າທີ່ຢູ່ເຂດພູດອຍຫ່າງໄກສອກຫຼີກ.

- ກຳນົດນະໂຍບາຍຕໍ່ບຸກຄະລາກອນອາຊີວະສຶກສາ ທີ່ມີຜົນງານ ແລະ ຄຸນງາມຄວາມດີດ້ວຍມາດຕະການຕ່າງໆ.

- ກຳນົດນະໂຍບາຍໃນການສົ່ງເສີມຫົວໜ່ວຍແຮງງານ/ທຸລະກິດເທັງພາກລັດ ແລະ ເອກະຊົນ, ຊຸມຊົນ ແລະ ພາກສ່ວນສັງຄົມອື່ນໆທີ່ປະກອບສ່ວນ ແລະ ລົງທຶນເຂົ້າໃນການພັດທະນາ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

- ສ້າງ ແລະ ປັບປຸງດຳລັດ, ຂໍ້ກຳນົດ ແລະ ລະບຽບການຕ່າງໆ ໃນການຄຸ້ມຄອງມະຫາພາກ ກໍ່ຄື ລະບຽບຫຼັກການໃນການຄຸ້ມຄອງສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ; ຂໍ້ກຳນົດ ຫຼື ລະບຽບຫຼັກການໃນການສ້າງລາຍຮັບວິຊາການ.

- ອອກຂໍ້ກຳນົດ ໃນການຈັດສັນງົບປະມານສຳລັບການພັດທະນາ ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຈາກງົບປະມານຂອງລັດ, ບັນດາກອງທຶນ, ລາຍຮັບວິຊາການຂອງສະຖານສຶກສາ ແລະ ການປະກອບສ່ວນຂອງສັງຄົມ, ຫົວໜ່ວຍທຸລະກິດທັງພາກລັດ ແລະ ພາກເອກະຊົນ ຕອບສະໜອງກັບຄວາມຕ້ອງການອັນຈຳເປັນຂອງການຝຶກອົບຮົມ.

# ພາກທີ IV
# ແຜນດຳເນີນງານ ການພັດທະນາວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ແຕ່ປີ 2010-2020

ຄາດໝາຍ:

- ມີກຳລັງແຮງງານທີ່ມີຄຸນະພາບຮອບດ້ານ, ສາມາດແກ້ງແຍ່ງແຂ່ງຂັນ ແລະເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ, ສາມາດປະກອບການໃນຫົວໜ່ວຍທຸລະກິດ ຫຼື ປະກອບການດ້ວຍຕົນເອງ, ສາມາດຍົກສະມັດຕະພາບຂອງການຜະລິດ ແລະ ການບໍລິການ. ພ້ອມດຽວກັນນັ້ນກໍ່ມີກຳລັງແຮງງານພຽງພໍກັບຄວາມຕ້ອງການຂອງຂະແໜງການຕ່າງໆ ເພື່ອຮອງຮັບໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄືການຫັນເປັນອຸສາຫະກຳ ແລະ ທັນສະໄໝ.

- ປັບປຸງພື້ນຖານໂຄງລ່າງ, ປະກອບພື້ນຖານວັດຖຸ-ເຕັກນິກ, ພັດທະນາຫຼັກສູດ, ຕຳລາຮຽນ ແລະ ສື່ການຮຽນ-ການສອນ ໃຫ້ໄດ້ມາດຕະຖານສາກົນ.

- ມີໂຮງຮຽນເຕັກນິກ-ວິຊາຊີບ ຍົກລະດັບເປັນວິທະຍາໄລເຕັກນິກ ເພີ່ມອີກຢ່າງໜ້ອຍໃຫ້ໄດ້ 4 ແຫ່ງ; ມີໂຮງຮຽນ/ສູນຝຶກອົບຮົມວິຊາຊີບ ເພີ່ມອີກຢ່າງໜ້ອຍ 5 ແຫ່ງ ໃນບາງເມືອງໃຫຍ່ທີ່ມີການຂະຫຍາຍ ຕົວທາງດ້ານເສດຖະກິດ-ສັງຄົມ.

- ມີການຂະຫຍາຍສາຂາອາຊີບຕ່າງໆທີ່ເປັນທ່າແຮງ ແລະ ພູມປັນຍາຂອງທ້ອງຖິ່ນ ເຊັ່ນ: ໄຟຟ້ານ້ຳຕົກ, ໄຟຟ້າກົນຈັກ, ສ້ອມແປງລົດຍົນ, ຈອດ ແລະ ທໍ່ນ້ຳ, ຂຸດຄົ້ນ-ສຳຫຼວດ-ປຸງແຕ່ງແຮ່, ຄຸ້ມຄອງທີ່ດິນ ແລະ ຊັບສິນ, ປົກປັກຮັກສາທຳມະຊາດ ແລະ ສິ່ງແວດລ້ອມ, ການຄ້າ, ຄົມມະນາຄົມຂົນສົ່ງ, ເຕັກໂນໂລຊີການສື່ສານ, ຫັດຖະກຳ, ອຸດສາຫະກຳປຸງແຕ່ງ, ການທ່ອງທ່ຽວ, ການບໍລິການທາງຜ່ານ ແລະ ອື່ນໆ.

- ມີການກໍ່ສ້າງ, ບຳລຸງ ແລະ ພັດທະນາຄູ ແລະ ບຸກຄະລາກອນອາຊີວະສຶກສາ ແລະ ອົບຮົມວິຊາຊີບ ທີ່ມີຄຸນນະພາບ ສາມາດສະໜອງຜູ້ບໍລິຫານ, ຄູ-ອາຈານ ແລະ ພະນັກງານພຽງພໍກັບຄວາມຕ້ອງການ ຂອງສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

- ສົ່ງເສີມແມ່ຍິງໃຫ້ສາມາດເຂົ້າຮຽນໃນສາຂາວິຊາ ເຕັກນິກເພີ່ມຂຶ້ນຢ່າງໜ້ອບ 10% ແລະຜູ້ດ້ອຍໂອ ກາດໃຫ້ໄດ້ຝຶກອົບຮົມວິຊາຊີບເພີ່ມຂຶ້ນຢ່າງໜ້ອຍ 15%.

- ມີລະບົບການບໍລິຫານ ແລະ ການຄຸ້ມຄອງໂຮງຮຽນ, ລະບົບການປະກັນຄຸນນະພາບ, ລະບົບການ ຄຸ້ມຄອງ-ບໍລິຫານງົບປະມານ ແລະ ການເງິນ ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ທີ່ຄົບຊຸດ ແລະ ມີປະສິດທິພາບ.

**1.ແຜນງານຂະຫຍາຍໂອກາດເຂົ້າຮຽນ**

ໂຄງການທີ 1: ກໍ່ສ້າງ, ປັບປຸງ ແລະ ຂະຫຍາຍສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ກິດຈະກຳ:

- ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງຮຽນອາຊີວະສຶກສາ / ສູນຝຶກອົບຮົມວິຊາຊີບ.
- ຍົກລະດັບໂຮງຮຽນເຕັກນິກ-ວິຊາຊີບໃຫ້ເປັນວິທະຍາໄລເຕັກນິກ ຫລື ວິທະຍາໄລອາຊີວະສຶກສາ ເພີ່ມອີກ 4 ແຫ່ງ.
- ຂະຫຍາຍສາຂາອາຊີບຕ່າງໆທີ່ເປັນທ່າແຮງທາງດ້ານເສດຖະກິດເຊັ່ນ: ໄຟຟ້ານ້ຳຕົກ, ໄຟຟ້າກົນຈັກ, ສ້ອມແປງລົດຍົນ, ຈອດ ແລະ ທໍ່ນ້ຳ, ຂຸດຄົ້ນ-ສຳຫຼວດ-ປຸງແຕ່ງແຮ່, ການທ່ອງທ່ຽວ, ການຄຸ້ມຄອງທີ່ດິນ-ຊັບສິນ, ປົກປັກຮັກສາທຳມະຊາດ ແລະ ສິ່ງແວດລ້ອມ, ການຄ້າ, ຄົມມະນາຄົມ-ຂົນສົ່ງ, ເຕັກໂນໂລຊີການສື່ສານ, ຫັດຖະກຳ, ອຸດສາຫະກຳປຸງແຕ່ງ, ການບໍລິການທາງຜ່ານ ແລະ ອື່ນໆ.
- ສ້າງຕັ້ງໂຮງຮຽນເຕັກນິກ-ວິຊາຊີບ/ສູນຝຶກອົບຮົມວິຊາຊີບໃນບັນດາຕົວເມືອງທີ່ມີເສດຖະກິດຂະຫຍາຍຕົວດີ ໃຫ້ໄດ້ຢ່າງໜ້ອຍເພີ່ມຂຶ້ນອີກ 3 ແຫ່ງ.

ໂຄງການທີ 2: ສົ່ງເສີມສັງຄົມ ແລະ ພາກສ່ວນທຸລະກິດປະກອບສ່ວນ ໃນການພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.

ກິດຈະກຳ:

- ສືບຕໍ່ປຸກລະດົມ, ຊຸກຍູ້ ແລະ ສົ່ງເສີມຊຸມຊົນ, ອົງການຈັດຕັ້ງສັງຄົມ ແລະ ຜູ້ປະກອບການປະກອບສ່ວນເຂົ້າໃນການພັດທະນາອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ.
- ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ສະພາທີ່ປຶກສາອາຊີວະສຶກສາເຮັດໜ້າທີ່ໃນການປະສານງານ ແລະ ຮ່ວມມືລະຫວ່າງ ພາກລັດແລະພາກເອກະຊົນເພື່ອສືບຕໍ່ພັດທະນາກຳລັງແຮງງານລາວ ໃຫ້ມີຄຸນນະພາບ.

**2. ແຜນງານປັບປຸງຄຸນະພາບ ແລະ ຄວາມສອດຄ່ອງ**

ໂຄງການທີ 1: ປັບປຸງຮູບແບບອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ກິດຈະກຳ:

- ປັບປຸງຮູບແບບການຝຶກອົບຮົມໃນ ແລະ ນອກໂຮງຮຽນ, ແບບມີສ່ວນຮ່ວມ, ແບບປະສົມ, ແບບອັດທະຍາໄສ, ການສຶກສາທາງໄກ ການຮຽນຜ່ານສື່ເອເລັກໂຕຣນິກ.
- ປັບປຸງຫຼັກສູດວິຊາ ແລະ ລະດັບຕ່າງໆເພື່ອໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມກໍ່ຄືຄວາມຕ້ອງການຂອງຕະຫຼາດແຮງງານໃນປະເທດ.
- ຜັນຂະຫຍາຍການນຳເອົາວິຊາຊີບເຂົ້າໃນຫຼັກສູດຢູ່ໃນໂຮງຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍຂອງແຂວງ.
- ຈັດຕັ້ງການແນະແນວວິຊາຊີບ ໃນໂຮງຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍ ແລະ ການໃຫ້ຄຳປຶກສາກ່ຽວກັບອາຊີບ ເພື່ອກະກຽມເຂົ້າສູ່ການປະກອບການ.

- ນຳເອົາວິຊາເຕັກໂນໂລຊີການສື່ສານ, ວິຊາຄວາມຮູ້ດ້ານການປະກອບການ(SME) ແລະ ສິ່ງແວດລ້ອມ ເຂົ້າໃນຫຼັກສູດສາຍອາຊີວະສຶກສາ.
- ສ້າງປື້ມຄູ່ມື, ສື່ການຮຽນ-ການສອນ ແລະ ອຸປະກອນສຳລັບການຝຶກອົບຮົມວິຊາຊີບໃນຮູບແບບຕ່າງໆ.

<u>ໂຄງການທີ 2:</u> ກໍ່ສ້າງ ແລະ ບຳລຸງຄູ ແລະ ພັດທະນາບຸກຄະລາກອນອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ກິດຈະກຳ:

- ຕິດຕາມ ແລະ ປະເມີນຜົນການກໍ່ສ້າງ ແລະ ບຳລຸງຄູອາຊີວະສຶກສາໃນລະດັບຊັ້ນສູງ ແລະ ປະລິນຍາຕີ.
- ຂະຫຍາຍສະຖາບັນສ້າງຄູອາຊີວະສຶກສາໃນລະດັບພາກເພື່ອຕອບສະໜອງກັບຄວາມຕ້ອງການຕົວຈິງ ໃຫ້ແກ່ບັນດາໂຮງຮຽນອາຊີວະສຶກສາ ແລະ ສູນຝຶກອົບຮົມວິຊາຊີບ.
- ສ້າງຕາໜ່າງຮ່ວມມືໃນລະດັບພາກພື້ນ ແລະ ສາກົນເພື່ອແລກປ່ຽນດ້ານວິຊາການ ແລະ ເພື່ອສ້າງຄູອາຊີວະສຶກສາລະດັບປະລິນຍາໂທ ແລະປະລິນຍາເອກ.

<u>ໂຄງການທີ 3:</u> ປະກັນຄຸນນະພາບ ຂອງວຽກງານອາຊີວະສຶກສາ ແລະ ອົບຮົມ ວິຊາຊີບ

ກິດຈະກຳ:

- ປັບປຸງມາດຖານຄູ ແລະ ບຸກຄະລາກອນອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
- ປັບປຸງມາດຖານສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບ.
- ປັບປຸງ ແລະ ພັດທະນາມາດຖານອາຊີບ ແລະ ການຝຶກອົບຮົມວິຊາຊີບ; ຈັດຕັ້ງການທົດສອບ ຄວາມສາມາດ, ທັກສະສີມື ແລະ ການຮັບຮອງຜົນການຮຽນ ຫຼື ປະສົບການໃນໄລຍະຜ່ານມາ.

<u>ໂຄງການທີ4:</u> ພັດທະນາຂໍ້ມູນ-ຂ່າວສານອາຊີວະສຶກສາ ແລະ ອົບຮົມວິຊາຊີບ

- ປັບປຸງລະບົບຂໍ້ມູນ-ຂ່າວສານອາຊີວະສຶກສາ, ຈັດວາງຮູບແບບຖານຂໍ້ມູນ ໃຫ້ສອດຄ່ອງກັບລະບົບ ຂໍ້ມູນ-ຂ່າວສານຂອງກະຊວງສຶກສາທິການ ຫຼື ກະຊວງແຮງງານ.
- ສຶກສາ/ວິໄຈຄວາມຕ້ອງການດ້ານການຝຶກອົບຮົມ ແລະ ຄວາມຈຳເປັນໃນການປັບປຸງ ແລະ ຍົກສູງຄຸນນະພາບອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ ຂອງການພັດທະນາເສດຖະກິດສັງຄົມ ໃນແຕ່ລະໄລຍະ.
- ສ້າງລະບົບລາຍງານປະຈຳປີ ກ່ຽວກັບວຽກງານ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

– ສ້າງລະບົບການຕິດຕາມຜູ້ຮຽນຈົບ ໃນສາຍ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ.

**3. ແຜນງານບໍລິຫານ ແລະ ການຄຸ້ມຄອງ ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ**

<u>ໂຄງການທີ 1</u>: ປັບປຸງກົງຈັກການຄຸ້ມຄອງສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ

ກິດຈະກຳ:

– ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນຄຸ້ມຄອງ-ບໍລິຫານ ວຽກງານ ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ແຕ່ສູນກາງລົງຮອດ ທ້ອງຖິ່ນ.

– ຍົກລະດັບສູນພັດທະນາອາຊີວະສຶກສາໃຫ້ເປັນສະຖາບັນພັດທະນາອາຊີວະສຶກສາ.

– ຍົກລະດັບທາງດ້ານການບໍລິຫານ ແລະ ຄຸ້ມຄອງໃຫ້ແກ່ຜູ້ບໍລິຫານອາຊີວະສຶກສາ.

<u>ໂຄງການທີ 2</u>: ສ້າງນະໂຍບາຍ ແລະ ເຄື່ອງມືຄຸ້ມຄອງມະຫາພາກ

ກິດຈະກຳ:

– ປັບປຸງຂໍ້ກຳນົດ, ກົດລະບຽບ ກ່ຽວກັບການຄຸ້ມຄອງ ວຽກງານອາຊີວະສຶກສາ ແລະ

ອົບຮົມວິຊາຊີບໃຫ້ສອດຄ່ອງກັບສະພາບການຕົວຈິງ.

– ຜັນຂະຫຍາຍ ແລະ ປັບປຸງຂໍ້ກຳນົດກົດລະບຽບກ່ຽວກັບນະໂຍບາຍຕໍ່ຄູອາຊີວະສຶກສາ.

– ປັບປຸງຂໍ້ກຳນົດກົດລະບຽບໃນການໃຊ້ຈ່າຍ ແລະ ການລົງທຶນໃນການພັດທະນາອາຊີວະ ສຶກສາ ແລະ ອົບຮົມວິຊາຊີບ.

# ພາກທີ V
# ວິທີການໃນການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍສູ້ຊົນ ທີ່ກຳນົດໄວ້ໃນແຜນຍຸດທະສາດການພັດທະນາອາຊີວະສຶກສາ ແລະ ອິບຮົມວິຊາຊີບ ແລະແຜນດຳເນີນງານ ໃຫ້ສຳເລັດຜົນນັ້ນ, ທຸກພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ປະສານສົມທົບກັນຢ່າງແໜ້ນແຟ້ນ ແລະ ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນ ດັ່ງລຸ່ມນີ້:

1. ກະຊວງສຶກສາທິການ ສົບທົບກັບພາກສ່ວນກ່ຽວຂ້ອງ ຮ່າງດຳລັດກ່ຽວກັບ ການພັດທະນາ ອາຊີວະສຶກສາແລະອົບຮົມ ວິຊາຊີບ, ຮ່າງ ຄຳສັ່ງແນະນຳ ແລະ ເຜີຍແຜ່ກ່ຽວກັບການຈັດຕັ້ງປະຕິບັດແຜນຍຸດທະສາດສະບັບນີ້

2. ກະຊວງສຶກສາທິການ ຮັບຜິດຊອບຊີ້ນຳທາງດ້ານວິຊາການໃນການພັດທະນາອາຊີວະສຶກສາແລະອົບຮົມວິຊາຊີບ ໂດຍປະສານງານກັບຂະແໜງການທີ່ກ່ຽວຂ້ອງ.

3. ກະຊວງສຶກສາທິການ ມີໜ້າປະສານງານ ແລະຮ່ວມມື ກັບຂະແໜງການທີ່ກ່ຽວຂ້ອງ, ພາກສ່ວນເສດຖະກິດ, ອຳນາດການປົກຄອງທ້ອງຖິ່ນ ແລະອົງການຜູ້ໃຫ້ທຶນ ທັງພາຍໃນ ແລະຕ່າງປະເທດ ເພື່ອຍາດແຍ່ງເອົາການຊ່ວຍເຫລືອທາງດ້ານທຶນຮອນ ແລະ ດ້ານວິຊາການ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາອາຊີວະສຶກສາ ແລະອົບຮົມວິຊາຊີບໃຫ້ສຳເລັດຜົນ.

4. ບັນດາກົມກອງທີ່ກ່ຽວຂ້ອງ, ສະຖານອາຊີວະສຶກສາ ແລະອົບຮົມວິຊາຊີບ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ມີໜ້າທີ່ຜັນຂະຫຍາຍແຜນຍຸດທະສາດສະບັບນີ້ ໂດຍສ້າງເປັນແຜນແມ່ບົດ, ແຜນງານ, ແຜນການ ,ໂຄງການແລະມີການກຳນົດກິດຈະກຳ,ຄາດໝາຍ, ແຜນງົບປະມານ, ມາດຕະການຈັດຕັ້ງປະຕິບັດ ລະອຽດຂອງຕົນ, ຫັນລົງຮາກຖານຢ່າງແຂງແຮງ ເພື່ອຊຸກຍູ້ຂະບວນການພັດທະນາ ວຽກງານອາຊີວະສຶກສາ ແລະອົບຮົມວິຊາຊີບ.

5. ອົງການຄຸ້ມຄອງອາຊີວະສຶກສາ ແລະອົບຮົມວິຊາຊີບ ມີໜ້າທີ່ຊີ້ນຳ, ກວດກາ, ປະເມີນຜົນຕີລາຄາການຈັດຕັ້ງປະຕິບັດແຜນຍຸດທະສາດ ຕາມພາລະບົດບາດຂອງຕົນເອງ, ສົ່ງເສີມ ແລະ ຍ້ອງຍໍຊົມເຊີຍການຈັດຕັ້ງ ແລະບຸກຄົນດີເດັ່ນ.

6. ແຫລ່ງທຶນໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດ ແລະ ແຜນຍຸດທະສາດດຳເນີນງານການພັດທະນາວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ແມ່ນໄດ້ມາຈາກງົບປະມານຂອງລັດ, ການປະກອບສ່ວນຂອງພາກສ່ວນເສດຖະກິດອື່ນໆ, ການລົງທຶນຂອງພາກເອກະຊົນ, ການປະກອບສ່ວນຂອງອົງການຈັດຕັ້ງສັງຄົມ ທັງພາຍໃນ ແລະຕ່າງປະເທດ, ຈາກການຊ່ວຍເຫລືອລ້າ, ການກູ້ຢືມ ແລະການລົງທຶນຂອງຕ່າງປະເທດ.

ເອກະສານຄັດຕິດ

## ນິຍາມຄຳສັບ

**ແຜນຍຸດທະສາດ:** ແຜນການເພື່ອບັນລຸເປົ້າໝາຍໂດຍກຳນົດນະໂຍບາຍທີ່ເປັນເອກະພາບໃນການຈັດຕັ້ງປະຕິບັດ

**ອາຊີວະສຶກສາ:** ການສຶກສາດ້ານເຕັກນິກ ແລະ ວິຊາຊີບ

**ການສຶກສາເຕັກນິກ:** ການສຶກສາທີ່ເຮັດໃຫ້ຜູ້ຮຽນໄດ້ຮັບ ແລະ ມີພາກປະຕິບັດຕົວຈິງດ້ານທັກສະສີມືທີ່ຈຳເປັນສຳລັບອາຊີບຫລືວຽກງານໃດໜຶ່ງທີ່ພົວພັນເຖິງການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ.

**ການສຶກສາວິຊາອາຊີບ:** ແມ່ນການສຶກສາທີ່ເຮັດໃຫ້ຜູ້ຮຽນປະກອບດ້ວຍທັກສະສີມື ຫຼື ມີຄວາມຊຳນານງານທີ່ໃຊ້ໃນຂົງເຂດວຽກງານໃດໜຶ່ງ.

**ການຝຶກອົບຮົມວິຊາຊີບ:** ການຮຽນໄລຍະສັ້ນ ເພື່ອຝຶກເອົາທັກສະ, ຄວາມຮູ້ຄວາມສາມາດທີ່ຈຳເປັນເພື່ອສ້າງໃຫ້ຜູ້ຮຽນໄດ້ຍົກລະດັບ, ຮຽນເພີ່ມເຕີມ ແລະປັບປຸງຄວາມຮູ້ຂອງຕົນໃຫ້ທັນກັບສະພາບການປ່ຽນແປງໃນອາຊີບ ຫລື ວຽກງານໃດໜຶ່ງ.

**ອາຊີວະສຶກສາແລະອົບຮົມວິຊາຊີບ :** ຂະບວນການສຶກສາດ້ານເຕັກນິກ ແລະ ວິຊາຊີບແລະການ ຝຶກອົບຮົມເພື່ອກໍ່ສ້າງແລະພັດທະນາກຳລັງແຮງງານໃຫ້ມີຄວາມຮູ້, ຄວາມສາມາດດ້ານວິຊາສະເພາະ ແລະ ທັດສະນະຄຸນສົມບັດທີ່ຖືກຕ້ອງ ໃນລະດັບທີ່ແນ່ນອນ ເພື່ອ ຕອບສະໜອງ ຄວາມຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ.

**ການສຶກສາໃນໂຮງຮຽນ :** ການສຶກສາທີ່ກຳນົດຈຸດປະສົງ, ວິທີການສຶກສາ, ຫລັກສູດ, ໄລຍະເວລາຮຽນໂດຍມີການວັດ ແລະ ປະເມີນຜົນ ຊຶ່ງເປັນເງື່ອນໄຂຂອງການສຳເລັດການສຶກສາທີ່ ແນ່ນອນ.

**ການສຶກສານອກໂຮງຮຽນ:** ການສຶກສາທີ່ມີຄວາມຍືດຍຸ່ນໃນການກຳນົດຈຸດປະສົງ, ຮູບແບບ, ວິທີການຈັດການສຶກສາ, ໄລຍະເວລາຂອງການສຶກສາໂດຍກຳນົດເນື້ອໃນ ແລະ ຫລັກສູດໃຫ້ເໝາະກັບສະພາບການ ,ເງື່ອນໄຂ ແລະ ຄວາມຕ້ອງການຂອງແຕ່ລະກຸ່ມເປົ້າໝາຍ.

**ການສຶກສາຕາມອັດທະຍາໄສ:** ການສຶກສາທີ່ໃຫ້ຜູ້ຮຽນໄດ້ຮຽນຮູ້ດ້ວຍຕົນເອງຕາມຄວາມສົນໃຈ, ສະພາບແວດລ້ອມ, ຄວາມພ້ອມ ແລະ ໂອກາດ ໂດຍການຮຽນຈາກບຸກຄົນ, ປະສົບການ, ສັງຄົມ, ສະພາບແວດລ້ອມ, ສື່ ແລະ ແຫລ່ງຄວາມຮູ້ອື່ນໆ.. .

**ການສຶກສາຕະຫລອດຊີວິດ:** ການສຶກສາທີ່ເກີດຈາກການປະສົມປະສານລະຫວ່າງການສຶກສາໃນລະບົບ, ການສຶກສານອກລະບົບໂຮງຮຽນ ແລະ ການສຶກສາຕາມອັດທະຍາໄສ ເພື່ອ ໃຫ້ສາມາດພັດທະນາຄຸນນະພາບຊີວິດ

**ການສຶກສາຕໍ່ເນື່ອງ :** ການສຶກສາເພື່ອຍົກລະດັບຫລື ເພີ້ມຄວາມຮູ້ ແລະ ທັກສະສີມື ເພື່ອຮຽນວິຊາສະເພາະໃດໜຶ່ງ ຫລືເຂົ້າຮຽນວິຊາຊີບໃດໜຶ່ງ.

**ການສຶກສາເຊື່ອມຕໍ່ :** ການຮຽນທີ່ເຊື່ອມຕໍ່ຫລັກສູດຊຶ່ງສາມາດທຽບໂອນໜ່ວຍກິດ ຫລື ໜ່ວຍວິຊາຮຽນ ໂດຍຮັບຮູ້ການຮຽນມາກ່ອນໜ້ານັ້ນ.

**ວິຊາຊີບແບບປະສົມ:** ວິທີການທີ່ປະສານລະຫວ່າງຮູບແບບການສຶກສາໃນລະບົບ, ນອກລະບົບ ແລະ ແບບອັດທະຍາໄສ ຊຶ່ງສາມາດຈັດຕັ້ງການຮຽນ-ການສອນຢູ່ໃນສະຖານສຶກສາແຫ່ງດຽວ ຕາມເງື່ອນໄຂທີ່ຖືກກຳນົດ ແລະ ອຳນວຍຄວາມສະດວກ ໃຫ້ ແລະ ການທຽບໂອນໜ່ວຍກິດຂອງການຮຽນ ລະຫວ່າງໃນລະບົບແລະນອກລະບົບ.

**ການຝຶກອົບຮົມແບບມີສ່ວນຮ່ວມ:** ການຝຶກອົບຮົມດ້ວຍການເຮັດພາກປະຕິບັດຕົວຈິງ ເປັນຫລັກການ ໂດຍການຮ່ວມມືກັບພາກສ່ວນເອກະຊົນ . ການຮຽນພາກທິດສະດີ ຕ້ອງຈັດຢູ່ໃນໂຮງຮຽນ ແລະ ການຮຽນພາກປພຕິບັດແມ່ນຈັດຢູ່ໃນສະຖານປະກອບການ. ການຮ່ວມມືນີ້ຈະອີງໃສ່ລະບຽບການ ແລະ ເງື່ອນໄຂ ແລະ ສັນຍາ ຮ່ວມມື ສອງ ຝ່າຍ ( ໂຮງຮຽນ ແລະ ສະຖານປະກອບການ ) ແລະ ສາມ ຝ່າຍ (ໂຮງຮຽນ, ສະຖານປະກອບການ ແລະ ນັກຮຽນ ) .

**ການຮຽນບາງເວລາ :** ການຮຽນຕາມຫລັກສູດ ແຕ່ມີ ການວາງແຜນເພື່ອໃຫ້ສາມາດ ຮຽນແລະ ເຮັດວຽກພ້ອມ ແຕ່ມີການອານຸຍາດໃຫ້ລາພັກຮຽນ. ການຮຽນມີ ສາມທາງເລືອກ ຊຶ່ງ ນຳໃຊ້ ລະບົບລາພັກມາຮຽນ ບາງວັນ , ຮຽນທາງຈົດໝາຍ ຫລື ຮຽນບາດດຽດໂລດ ໂດຍຂໍອະນຸຍາດພັກໄປຮຽນ.

**ການຮຽນ ເຕັມເວລາ:** ການຮຽນຄົບຕາມຫລັກສູດ ແລະ ບໍ່ໄດ້ຢຸດພັກ

**ການຮຽນແບບເປີດ:** ການສຶກສາທີ່ສາມາດ ຢຸດ ການພັກຮຽນ ແລະ ເກັບການສະສົມ ໜ່ວຍກິດ ຫລື ໜ່ວຍວິຊາຮຽນ ຊຶ່ງສາມາດ ເຊື່ອມຕໍ່ ແລະ ຕໍ່ເນື່ອງໃນລະດັບການສຶກສາໃດໜຶ່ງ.

**ການຮຽນທາງໄກ:** ການຮຽນໂດຍຜ່ານທາງຈົດໝາຍ, ທາງລາຍການວິທະຍຸ ຫລືໂທລະທັດ ຫລື ຮຽນ ທາງ ອິນເຕີແນັດ ຫລື ສື່ສານທາງ ຄອມພິວເຕີ.

**ການຮຽນສາຍພິເສດ:** ການຮຽນທີ່ ຈ່າຍຄ່າຮຽນໃນຂະແໜງວິຊາຕ່າງໆ ຊຶ່ງທາງສະຖານສຶກສາທັງຂອງລັດ ຫລື ເອກະຊົນ ອາດຈັດຕາມຫລັກສູດໄລຍະສັ້ນ ຫລື ໄລຍະຍາວ.

**ທັກສະສີມື :** ຄວາມຊຳນານງານໃນວິຊາຊີບໃດໜຶ່ງ.

## ໂຮງຮຽນອາຊີວະສຶກສາ ຂຶ້ນກັບການຄຸ້ມຄອງ ຂອງກະຊວງສຶກສາທິການ ຕາມຫຼັກສູດ ແລະ ວິຊາຮຽນ

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫຼັກສູດ ຊັ້ນຕົ້ນ | ຫຼັກສູດ ຊັ້ນກາງ | ຫຼັກສູດ ຊັ້ນສູງ | ຫຼັກສູດ ຊັ້ນສູງຕໍ່ເນື່ອງ |
|---|---|---|---|---|---|---|
| 1 | ວິທະຍາໄລເຕັກນິກ ສັບພະວິຊາ<br>ບ. ໂສກປ່າຫຼວງ, ມ. ສີສັດຕະນາກ,<br>ນະຄອນຫຼວງວຽງຈັນ.<br>ໂທ: (856-021) 313303; 312420 | ວັດແທກແຜນທີ່ | | X | X | |
| | | ຂຸດຄົ້ນສຳຫຼວດແຮ່ | | X | X | X |
| | | ຂຸດຄົ້ນປຸງແຕ່ງແຮ່ | | X | X | |
| | | ໄຟຟ້າ ເຂືອຂ່າຍ | | X | X | |
| | | ວັດແທກຄຸ້ມຄອງທີ່ດິນ | | | X | |
| 2 | ເຕັກນິກ ປາກປ່າສັກ<br>ບ. ວັດຈັນ, ມ. ຈັນທະບູລີ<br>ຂ. ນະຄອນຫຼວງວຽງຈັນ.<br>ໂທ: (856-021) 213142; 228167 | ເຕັກໂນໂລຊີລົດຍົນ | | X | | |
| | | ຈັກກົນໂຮງງານ | | X | | |
| | | ໄຟຟ້າເຕັກນິກ | | X | | |
| | | ເອເລັກໂຕຣນິກ | | X | | |
| | | ຈອດ ແລະ ທໍ່ນ້ຳ | | X | | |
| | | ຊ່າງໄມ້-ເຟີນີເຈີ | | X | | |
| | | ກໍ່ສ້າງເຄຫະສະຖານ | | X | | |
| | | ອາຫານ-ການໂຮງແຮມ/ການທ່ອງທ່ຽວ | | X | | |
| | | ການບັນຊີ | | X | X | X |
| | | ເລຂານຸການ | | X | | |
| | | ຕັດຫຍິບ | X | | | |
| 3 | ເຕັກນິກ ລາວ-ເຢຍລະມັນ<br>ບ. ວັດນາກ, ມ. ສີສັດຕະນາກ<br>ຂ. ນະຄອນຫຼວງວຽງຈັນ<br>ໂທ: (856-021) 312432; 312538 | ເຕັກໂນໂລຢີລົດຍົນ | | X | | |
| | | ໄຟຟ້າ ເຕັກນິກ | | X | | |
| | | ຈັກກົນໂຮງງານ | | X | | |
| | | ຈອດ ແລະ ທໍ່ນ້ຳ | | X | | |
| 4 | ເຕັກນິກ ກະສິກຳ ດົງຄຳຊ້າງ<br>ບ. ດົງຄຳຊ້າງ, ມ. ຫາດຊາຍຟອງ<br>ນະຄອນຫຼວງວຽງຈັນ<br>ໂທ: (856-021) 480510 | ປູກຝັງ | | X | | |
| | | ລ້ຽງສັດ | | X | | |
| | | ປ່າໄມ້ | | X | | |
| | | | | | | |
| 5 | ເຕັກນິກ ແຂວງວຽງຈັນ<br>ບ. ນາເງິນ, ມ. ວຽງຄຳ, ຂ. ວຽງຈັນ<br>ໂທ: (856-021) 431509 | ຕັດຫຍິບເສື້ອຜ້າ | X | X | | |
| | | ອາຫານການໂຮງແຮມ | | X | | |
| | | ຊ່າງໄຟຟ້າ | | X | | |
| | | ຊ່າງກໍ່ສ້າງເຄຫະສະຖານ | | X | | |
| | | ກະສິກຳປູກຝັງ | | X | | |
| | | ກະສິກຳລ້ຽງສັດ | | X | | |
| | | ກະສິກຳປ່າໄມ້ | | X | | |
| | | ການເງິນ | | X | | X |
| | | ການບັນຊີ | | X | X | X |
| | | ບັນຊີຄອມພິວເຕີ | | X | | |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫຼັກສູດ ຊັ້ນຕົ້ນ | ຫຼັກສູດ ຊັ້ນກາງ | ຫຼັກສູດ ຊັ້ນສູງ | ຫຼັກສູດ ຊັ້ນສູງຕໍ່ເນື່ອງ |
|---|---|---|---|---|---|---|
| 6 | ເຕັກນິກ-ວິຊາຊີບ ສະຫວັນນະເຂດ | ອາຫານການໂຮງແຮມ | | X | | |
| | ບ. ທ່າແຮ, ມ. ຄັນທະບູລີ. | ຊ່າງທໍ່ນ້ຳ | | X | | |
| | ຂ. ສະຫວັນນະເຂດ | ໄຟຟ້າ | | X | | |
| | ໂທ: (856-041) 212149; 212120 | ຊ່າງໄມ້ | | X | | |
| | | ລົດຍົນ | | X | | |
| | | ຈັກກົນ | | X | | |
| | | ກໍ່ສ້າງ | | X | | |
| | | ບໍລິຫານທຸລະກິດ | | X | | X |
| | | ວັດແທກ-ຂົວທາງ | | X | | X |
| | | ເອເລັກໂຕຣນິກ | | X | | |
| 7 | ເຕັກນິກ-ວິຊາຊີບ ບໍລິຄຳໄຊ | ບໍລິຫານທຸລະກິດ | | X | | |
| | ບ. ຫ້ວຍຄູນ, ມ. ປາກຊັນ | ປູກຝັງ | | X | | |
| | ໂທ: (856-054) 790167 | ລ້ຽງສັດ | | X | | |
| | | ຊ່າງກໍ່ສ້າງເຄຫະສະຖານ | X | X | | |
| | | ຊ່າງໄມ້ | X | | | |
| | | ຕັດຫຍິບ | X | | | |
| 8 | ເຕັກນິກ-ວິຊາຊີບ ປາກເຊ | ໄຟຟ້າເຕັກນິກ(1) | | X | | |
| | ບ. ທ່າສະລາຄຳ, ມ. ປາກເຊ | ໄຟຟ້າເຕັກນິກ(2) | | X | | |
| | ຂ. ຈຳປາສັກ. | ບໍລິຫານທຸລະກິດ(1) | | X | | |
| | ໂທ: (856-031) 212007; 213801 | ບໍລິຫານທຸລະກິດ(2) | | X | | |
| | | ປຸງແຕ່ງອາຫານແລະການໂຮງແຮມ | X | X | | |
| | | ຊ່າງລົດຍົນ | X | X | | |
| | | ຊ່າງໂລຫະ | X | X | | |
| | | ຊ່າງຕັດຫຍິບ | | X | | |
| | | ກໍ່ສ້າງເຄຫະສະຖານ | | X | | |
| 9 | ເຕັກນິກ-ວິຊາຊີບ ອັດຕະປື | ປູກຝັງ | | X | | |
| | ບ. ເຊໃຫຍ່, ມ. ສາມັກຄີໄຊ, | ລ້ຽງສັດ | | X | | |
| | ຂ. ອັດຕະປື, ໂທ: 020 5478452 | ອາຫານການໂຮງແຮມ | | X | | |
| | | ກໍ່ສ້າງເຄຫະສະຖານ | | X | | |
| 10 | ເຕັກນິກ-ວິຊາຊີບ ຫຼວງພະບາງ | ບໍລິຫານທຸລະກິດ | | X | | |
| | ບ. ຄອຍ, ມ. ຫຼວງພະບາງ | ໄຟຟ້າ | | X | | |
| | ຂ. ຫຼວງພະບາງ | ຊ່າງສ້ອມແປງລົດຍົນ | X | X | | |
| | ໂທ:(856-071) 212020 | ຊ່າງກໍ່ສ້າງ | | X | | |
| | | ຊ່າງຈອດ-ທໍ່ນ້ຳ | X | X | | |
| | | ອາຫານ-ການໂຮງແຮມ | X | | | |
| | | ຊ່າງໄມ້ | | | | |
| | | | | | | |
| | | | | | | |

| ລ/ດ | ຊື່ ແລະ ທີ່ຢູ່ຂອງໂຮງຮຽນ | ຂະແໜງ/ວິຊາຮຽນ | ຫຼັກສູດ ຊັ້ນຕົ້ນ | ຫຼັກສູດ ຊັ້ນກາງ | ຫຼັກສູດ ຊັ້ນສູງ | ຫຼັກສູດ ຊັ້ນສູງຕໍ່ເນື່ອງ |
|---|---|---|---|---|---|---|
| 11 | ເຕັກນິກ-ວິຊາຊີບ ແຂວງຄຳມ່ວນ<br>ບ. ດອນເຂືອນຊ້າງ, ມ. ທ່າແຂກ<br>ຂ. ຄຳມ່ວນ<br>ໂທ: (856-051) 212538; 250004 | ຊ່າງກໍ່ສ້າງ | X | X | | |
| | | ບໍລິຫານທຸລະກິດ | | X | | |
| | | ຊ່າງໄຟຟ້າ | | X | | |
| | | ຊ່າງໄມ້ | X | | | |
| | | ອາຫານ-ການໂຮງແຮມ | X | | | |
| | | ຕັດຫຍິບ | X | | | |
| 12 | ວິຊາຊີບແບບປະສົມ ຫຼວງນ້ຳທາ<br>ມ. ຫຼວງນ້ຳທາ, ຂ. ຫຼວງນ້ຳທາ<br>ໂທ: 020 5686471 | ປູກຝັງ | | X | | |
| | | ລ້ຽງສັດ | | X | | |
| | | ກໍ່ສ້າງ | | X | | |
| 13 | ວິຊາຊີບແບບປະສົມ ຜົ້ງສາລີ<br>ມ. ເໜືອ, ຂ. ຜົ້ງສາລີ<br>ໂທ: 020 5787116 | ກະສິກຳ(ປູກຝັງ-ລ້ຽງສັດ) | | X | | |
| | | ບໍລິຫານການທ່ອງທ່ຽວ-ການໂຮງແຮມ | | X | | |
| | | ກໍ່ສ້າງ-ເຄຫະ | | X | | |
| 14 | ວິຊາຊີບແບບປະສົມ ບໍ່ແກ້ວ<br>ມ. ຫ້ວຍຊາຍ, ຂ. ບໍ່ແກ້ວ,<br>ໂທ: (856-84) 211451 | ປູກຝັງ | | X | | |
| | | ລ້ຽງສັດ | | X | | |
| | | ກໍ່ສ້າງເຄຫະສະຖານ | | X | | |
| | | ບໍລິຫານທຸລະກິດ | | X | | |
| 15 | ວິຊາຊີບແບບປະສົມ ໄຊຍະບູລີ<br>ມ. ໄຊຍະບູລີ, ຂ. ໄຊຍະບູລີ<br>ໂທ:(856-074) 211051 | ບໍລິຫານທຸລະກິດ | | X | | |
| | | ລ້ຽງສັດ | | X | | |
| | | ປູກຝັງ | X | X | | |
| | | ເຄຫະສະຖານ | | X | | |
| 16 | ວິຊາຊີບແບບປະສົມ ແຂວງຫົວພັນ<br>ບ. ວຽງໄຊ, ມ. ຫາງລ້ອງ, ຂ. ຫົວພັນ<br>ໂທ:020 5664031; 5764569 | ປູກຝັງ-ລ້ຽງສັດ | | X | | |
| | | ກໍ່ສ້າງ-ເຟີນີເຈີ | X | | | |
| | | ຕັດຫຍິບ | X | | | |
| 17 | ວິຊາຊີບແບບປະສົມ ແຂວງອຸດົມໄຊ<br>ບ. ບໍ່, ມ. ໄຊ, ຂ. ອຸດົມໄຊ<br>ໂທ:(856-081) 212267; 212246 | ປູກຝັງ | | X | | |
| | | ລ້ຽງສັດ | | X | | |
| | | ກໍ່ສ້າງ-ເຄຫະ | | X | | |
| 18 | ວິຊາຊີບແບບປະສົມ ແຂວງຊຽງຂວາງ<br>ບ. ຍວນ, ມ. ແປກ, ຂ. ຊຽງຂວາງ<br>ໂທ:020 5718269 | ກໍ່ສ້າງ-ເຄຫະ | | X | | |
| | | ປູກພືດ-ລ້ຽງສັດ | | X | | |
| | | ຕັດຫຍິບ | X | | | |
| | | ປຸງແຕ່ງອາຫານ | X | | | |
| 19 | ວິຊາຊີບມິດຕະພາບວຽງຈັນ-ຮ່າໂນ້ຍ<br>ບ. ໂພນໄຊດ ມ. ໄຊເສດຖາ<br>ນະຄອນຫຼວງວຽງຈັນ.X<br>ໂທ:(856-021) 412461 | ອິນຟໍເມຕິກຫ້ອງການ | | X | | |
| | | ອິນຟໍເມຕິກບັນຊີ | | X | | |
| | | ອິນຟໍເມຕິກຄຸ້ມຄອງຫ້ອງການ | | X | | |
| | | | | | | |